**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4847/ກປ

ນະຄອນຫຼວງວຽງຈັນ, ວັນທີ 09 OCT 2024

# ຂໍ້ຕົກລົງ

# ວ່າດ້ວຍ ການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4759/ກປມ, ລົງວັນທີ 02 ກັນຍາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຫ້ອງການ ສະບັບເລກທີ 3650/ຫກ, ລົງວັນທີ 17 ກັນຍາ 2024.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ເພື່ອຮັບປະກັນການຕອບສະໜອງວັດຖຸດິບ ເຂົ້າໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໃຫ້ໄດ້ຕາມມາດຕະຖານ, ມີປະສິດທິພາບ, ປະສິດທິຜົນສູງ ແນໃສ່ຍົກລະດັບການຄຸ້ມຄອງ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຕິດພັນກັບ ການປົກປັກຮັກສາປ່າໄມ້, ການພັດທະນາຊົນນະບົດ, ສ້າງລາຍຮັບ, ສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນບັນດາເຜົ່າ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ**

ການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ແມ່ນການຄຸ້ມຄອງທາງດ້ານວັດຖຸດິບ, ການສ້າງຕັ້ງ, ການດຳເນີນກິດຈະການໂຮງງານ ໃຫ້ຖືກຕ້ອງ ຕາມມາດຕະຖານເຕັກນິກ ພ້ອມທັງ ຊຸກຍູ້ ຕິດຕາມ ແລະ ກວດກາ ໃຫ້ສອດຄ່ອງ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງງານຜະລິດຖ່ານ** ໝາຍເຖິງ ໂຮງງານຜະລິດຖ່ານ ອັດເມັດ ແລະ ອັດແທ່ງ ທີ່ນຳເອົາ ໄມ້, ເສດໄມ້, ເສດພືດ ແລະ ຂີ້ເລື່ອຍ ມາປຸງແຕ່ງ ໃຫ້ເປັນຜະລິດຕະພັນຖ່ານອັດເມັດ ແລະ ຖ່ານອັດແທ່ງ ເພື່ອເປັນສິນຄ້າຈຳໜ່າຍພາຍໃນ ແລະ ສົ່ງອອກ;

2. **ເຕົາເຜົາຖ່ານ** ໝາຍເຖິງ ເຕົາເຜົາຖ່ານຂາວ, ເຕົາເຜົາຖ່ານດຳ ແບບຊື່ອຄາວ ແລະ ເຕົາຖ່ານດຳ ແບບຄອບຄົວ ທີ່ມີລັກສະນະຫຼາຍຮູບແບບ ເຊັ່ນ ກໍ່ສ້າງດ້ວຍດິນໜຽວ, ດິນຈີ່, ກະຜູ້ຍເຫຼັກ, ຂີ້ເລື່ອຍ, ຂີ້ແກບ ແລະ ອື່ນໆ ເພື່ອເຮັດເຕົາຜະລິດຖ່ານເປັນສິນຄ້າ ແລະ ຮັບໃຊ້ຄອບຄົວ;

3. **ເສດຖ່ານ** ໝາຍເຖິງ ຖ່ານທີ່ແຕກມຸ່ນເປັນກ້ອນນ້ອຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຢູ່ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງ ໄມ້ ແລະ ຜະລິດຕະພັນຖ່ານ

**ມາດຕາ 5 ການຄຸ້ມຄອງ ໄມ້ ແລະ ຜະລິດຕະພັນຖ່ານ**

ການຄຸ້ມຄອງ ໄມ້ ແລະ ຜະລິດຕະພັນຖ່ານ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ແຫຼ່ງວັດຖຸດິບ ທີ່ນຳມາຜະລິດຖ່ານ;
2. ການສຳຫຼວດ ເພື່ອຂຸດຄົ້ນໄມ້ຜະລິດຖ່ານ;
3. ການສ້າງແຜນ ແລະ ການອະນຸມັດແຜນຂຸດຄົ້ນໄມ້ຜະລິດຖ່ານ;
4. ການຂຸດຄົ້ນໄມ້ຜະລິດຖ່ານ;
5. ການເຄື່ອນຍ້າຍ ໄມ້ ແລະ ຖ່ານ;
6. ການນຳເຂົ້າ ແລະ ສົ່ງຜ່ານ ໄມ້ ແລະ ຜະລິດຕະພັນຖ່ານ;
7. ການສົ່ງອອກ ຜະລິດຕະພັນຖ່ານ.

**ມາດຕາ 6 ແຫຼ່ງວັດຖຸດິບ ທີ່ນຳມາຜະລິດຖ່ານ**

ລັດ ອະນຸຍາດໃຫ້ນຳໃຊ້ວັດຖຸດິບ ມາຜະລິດຖ່ານ ຈາກ ປ່າປູກ ທີ່ໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນໄມ້ປູກ ແລະ ໄມ້ທຳມະຊາດ ທີ່ນອນໃນເຂດປ່າຜະລິດ ທີ່ມີແຜນຈັດສັນ, ໃນເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດການຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ ທີ່ລັດຈັດສັນໃຫ້ບ້ານນຳໃຊ້ ແລະ ໄດ້ມອບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ.

ໄມ້ຕື້ວ ທີ່ນຳມາຜະລິດຖ່ານຂາວ ໃຫ້ດຳເນີນໃນເຂດປ່າຜະລິດ ທີ່ມີແຜນຈັດສັນ, ເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ ທີ່ລັດຈັດສັນໃຫ້ບ້ານນຳໃຊ້ ແລະ ໄດ້ມອບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ.

ໄມ້ທຳມະຊາດ ທີ່ນຳມາຜະລິດຖ່ານດຳ ໃຫ້ດຳເນີນໃນເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດຫັນປ່ຽນທີ່ດິນປ່າໄມ້ ທີ່ໄດ້ຮັບອະນຸຍາດຈາກ ລັດຖະບານ ຊຶ່ງໄດ້ຜ່ານການສຳຫຼວດຢ່າງລະອຽດຈະແຈ້ງ ແລະ ເຂດທີ່ດິນທີ່ເປັນກຳມະສິດ ນຳໃຊ້ທີ່ດິນຢ່າງຖືກຕ້ອງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ສຳລັບ ວັດຖຸດິບ ທີ່ນຳມາຜະລິດຖ່ານ ອັດເມັດ ແລະ ອັດແທ່ງ ອະນຸຍາດໃຫ້ນຳໃຊ້ ໄມ້ນ້ອຍ, ເສດໄມ້, ເສດພືດ, ເສດຖ່ານ ແລະ ຂີ້ເລື່ອຍ ຈາກ ໂຮງງານປຸງແຕ່ງໄມ້ ແລະ ເສດວັດຖຸດິບອື່ນ.

**ມາດຕາ 7 ການສຳຫຼວດ ເພື່ອຂຸດຄົ້ນໄມ້ຜະລິດຖ່ານ**

ການສຳຫຼວດໄມ້ຕື້ວ ແລະ ໄມ້ອື່ນໆ ທີ່ເກີດຕາມປ່າທຳມະຊາດ ເພື່ອຜະລິດຖ່ານ ໃຫ້ດຳເນີນໃນເຂດປ່າຜະລິດ ທີ່ມີແຜນຈັດສັນ, ເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ ທີ່ລັດຈັດສັນໃຫ້ບ້ານນຳໃຊ້, ເຂດທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ໃຫ້ສຳຫຼວດສຸ່ມຄອນຕົວຢ່າງ ແບບເປັນລະບົບ (Systematic) ຫຼື ບໍ່ເປັນລະບົບ

(Random) ເພື່ອປະເມີນບໍລິມາດໄມ້. ສໍາລັບ ການແບ່ງຂັ້ນການສໍາຫຼວດ ໃຫ້ປະຕິບັດຕາມ ຂໍ້ຕົກລົງ ວ່າດ້ວຍການສໍາຫຼວດປ່າໄມ້ ທີ່ກໍານົດໄວ້ໃນແຕ່ລະໄລຍະ.

ສໍາລັບ ໄມ້ປູກ ທີ່ຢູ່ໃນທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນໄມ້ປູກຢ່າງຖືກຕ້ອງແລ້ວ ສາມາດຕັດໄດ້ ໂດຍບໍ່ຈໍາເປັນສໍາຫຼວດ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ກ່ອນຈະຕັດນັ້ນ ຕ້ອງນໍາເອົາໃບທະບຽນປ່າປູກ ຫຼື ຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກໍາມະສິດ ພ້ອມທັງລາຍງານ ແລະ ແຈ້ງສະຖານທີ່ ຊະນິດພັນໄມ້, ຈໍານວນຕົ້ນໄມ້ທີ່ຈະຕັດ ໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກໍາຂໍ້ມູນ.

**ມາດຕາ 8 ການສ້າງແຜນ ແລະ ການອະນຸມັດແຜນຂຸດຄົ້ນໄມ້ຜະລິດຖ່ານ**

ການສ້າງແຜນ ແລະ ການອະນຸມັດແຜນຂຸດຄົ້ນໄມ້ຜະລິດຖ່ານ ໃຫ້ປະຕິບັດ ດັ່ງນີ້:

1. ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ສ້າງແຜນຂຸດຄົ້ນໄມ້ເພື່ອຜະລິດຖ່ານ ບົນພື້ນຖານຂໍ້ມູນສໍາຫຼວດຕົວຈິງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຈາກນັ້ນສົ່ງໃຫ້ ກົມປ່າໄມ້ ກ່ອນວັນທີ 30 ກັນຍາ ຂອງທຸກໆປີ;
2. ກົມປ່າໄມ້ ຄົ້ນຄວ້າ ສັງລວມ ແຜນຂຸດຄົ້ນໄມ້ ປະຈໍາປີ ຂອງບັນດາແຂວງ, ນະຄອນຫຼວງວຽງຈັນ ລາຍງານຫາ ກະຊວງກະສິກໍາ ແລະ ປ່າໄມ້ ເພື່ອສະເໜີລັດຖະບານ ພິຈາລະນາອະນຸມັດແຜນການຂຸດຄົ້ນໄມ້ ເພື່ອຜະລິດຖ່ານ ປະຈໍາປີ;
3. ກະຊວງກະສິກໍາ ແລະ ປ່າໄມ້ ອອກແຈ້ງການ ມອບແຜນການຂຸດຄົ້ນໄມ້ ເພື່ອຜະລິດຖ່ານ ປະຈໍາປີ ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຈັດຕັ້ງປະຕິບັດຕາມການອະນຸມັດຂອງລັດຖະບານ ພ້ອມທັງແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ຊາບ;
4. ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ອອກໃບອະນຸຍາດຂຸດຄົ້ນໄມ້ເພື່ອຜະລິດຖ່ານ ຕາມແຈ້ງການຂອງກະຊວງກະສິກໍາ ແລະ ປ່າໄມ້.

ສໍາລັບໄມ້ຕິ້ວ ເພື່ອຜະລິດຖ່ານຂາວ ທີ່ຂຸດຄົ້ນຈາກທີ່ດິນທີ່ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປູກ ແລະ ຟື້ນຟູ ໂດຍໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນຖືກຕ້ອງແລ້ວ ບໍ່ຈໍາເປັນຂໍອະນຸມັດແຜນການຂຸດຄົ້ນ ຈາກ ລັດຖະບານ ຫຼື ກະຊວງກະສິກໍາ ແລະ ປ່າໄມ້ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ຕ້ອງໄດ້ລາຍງານຂໍ້ມູນບໍລິມາດໄມ້ ໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຊາບ.

**ມາດຕາ 9 ການຂຸດຄົ້ນ ໄມ້ ຜະລິດຖ່ານ**

ການຂຸດຄົ້ນໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ຈາກ ເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້ ແມ່ນໃຫ້ຈັດຕັ້ງປະຕິບັດຕາມແຜນການອະນຸມັດໂກຕາຂຸດຄົ້ນ ເປັນອັນສະເພາະ ຕາມແຕ່ລະໂຄງການຕົວຈິງ ແລະ ມີການຕິດຕາມກວດກາຈາກ ຂະແໜງປ່າໄມ້ ໂດຍຢັ້ງຢືນຈາກ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ.

ເຂດປ່າໄມ້ ທີ່ລັດຈັດສັນໃຫ້ບ້ານນໍາໃຊ້ ສາມາດດໍາເນີນໄດ້ຕະຫຼອດປີ ແຕ່ຕ້ອງໄດ້ຮັບການອະນຸມັດແຜນການຂຸດຄົ້ນ ແລະ ມີການຕິດຕາມກວດກາຈາກ ຂະແໜງປ່າໄມ້ ໂດຍຢັ້ງຢືນຈາກ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ.

ສໍາລັບ ໄມ້ຕິ້ວ ທີ່ຂຸດຄົ້ນຈາກ ປ່າປູກ ແລະ ເຂດຟື້ນຟູປ່າ ທີ່ໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນຢ່າງຖືກຕ້ອງ ແລ້ວ, ເຈົ້າຂອງປ່າປູກ ສາມາດຂຸດຄົ້ນໄດ້ຕະຫຼອດປີ ບໍ່ຈໍາເປັນຂໍອະນຸມັດແຜນຂຸດຄົ້ນ ແຕ່ໃຫ້ມີການກວດກາ ແລະ ຢັ້ງຢືນ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ.

**ມາດຕາ 10 ການເຄື່ອນຍ້າຍ ໄມ້ ແລະ ຖ່ານ**

ການເຄື່ອນຍ້າຍໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ທີ່ຂຸດຄົ້ນຢູ່ໃນ ເຂດກໍ່ສ້າງພື້ນຖານໂຄງລ່າງ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ ທີ່ລັດຈັດສັນໃຫ້ບ້ານນໍາໃຊ້, ເຄື່ອນຍ້າຍ ລະຫວ່າງ ເມືອງຕໍ່ເມືອງ ພາຍໃນ

ແຂວງ ຕ້ອງມີເອກະສານເຄື່ອນຍ້າຍຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕາມແບບພິມ ຄຍມ 01, ສ່ວນການເຄື່ອນຍ້າຍໄມ້ ລະຫວ່າງ ແຂວງ ຫາ ແຂວງ ຫຼື ພາຍໃນປະເທດ ຕ້ອງມີເອກະສານເຄື່ອນຍ້າຍ ຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມແບບພິມ ຄຍມ 02.

ໄມ້ຕິ້ວ ແລະ ໄມ້ຊະນິດອື່ນ ທີ່ຂຸດຄົ້ນຈາກປ່າປູກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ປູກ ແລະ ຟື້ນຟູປ່າ ໂດຍໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນຢ່າງຖືກຕ້ອງແລ້ວ ບໍ່ຈຳເປັນຂໍອະນຸຍາດເຄື່ອນຍ້າຍພາຍໃນ ແຂວງ ແຕ່ຕ້ອງເອົາໃບທະບຽນ ຫຼື ໃບຢັ້ງຢືນ ແຈ້ງຕໍ່ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຊາບ.

ການເຄື່ອນຍ້າຍຖ່ານ ອັດເມັດ, ອັດແທ່ງ ແລະ ຖ່ານຂາວ ພາຍໃນປະເທດ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ອອກໃບອະນຸຍາດເຄື່ອນຍ້າຍ ແຕ່ຕ້ອງປະຕິບັດພັນທະຕ່າງໆ ໃຫ້ຖືກຕ້ອງຕາມລະບຽບການກ່ອນ, ການອອກໃບອະນຸຍາດເຄື່ອນຍ້າຍ ຕາມແບບພິມ ຄຍຖ 1, ອອກຕ່າງປະເທດ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ອອກໃບອະນຸຍາດເຄື່ອນຍ້າຍ ຕາມແບບພິມ ຄຍຖ 2.

ການເຄື່ອນຍ້າຍຖ່ານດຳ ເພື່ອທຸລະກິດພາຍໃນປະເທດ ຈຳນວນ 20 ຫາ 80 ເປົາ ຫຼື 0,5 ຫາ 2 ໂຕນ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ອອກອະນຸຍາດເຄື່ອນຍ້າຍ ຕາມແບບພິມ ຄຍຖດ 01.01, ຖ້າຫຼາຍກ່ວາ ຈຳນວນ 81 ເປົາ ຫຼື 2 ໂຕນຂຶ້ນໄປ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ອອກອະນຸຍາດເຄື່ອນຍ້າຍ ຕາມແບບພິມ ຄຍຖດ 01.02. ແຕ່ຕ້ອງແມ່ນຖ່ານດຳ ທີ່ມີແຫຼ່ງທີ່ມາຖືກຕ້ອງ, ມີໂກຕາຂຸດຄົ້ນໄມ້ ປະຈຳປີ, ມີໃບອະນຸຍາດຂຸດຄົ້ນ, ມີສັນຍາ ຊື້-ຂາຍ ແລະ ປະຕິບັດພັນທະຄ່າຊັບພະຍາກອນທຳມະຊາດ, ຄ່າອາກອນຕ່າງໆ ຕາມລະບຽບການທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

ສຳລັບ ການເຄື່ອນຍ້າຍຖ່ານດຳ ເພື່ອການຊົມໃຊ້ ແມ່ນບໍ່ຈຳເປັນຂໍໃບອະນຸຍາດເຄື່ອນຍ້າຍ ແຕ່ບໍ່ໃຫ້ເກີນ ຈຳນວນ 20 ເປົາ ຫຼື 0,5 ໂຕນ.

**ມາດຕາ 11 ການນຳເຂົ້າ ແລະ ສົ່ງຜ່ານ ໄມ້ ແລະ ຜະລິດຕະພັນຖ່ານ**

ລັດຖະບານ ອະນຸຍາດນຳເຂົ້າໄມ້ ທີ່ບໍ່ສາມາດສະໜອງພາຍໃນປະເທດໄດ້ ແຕ່ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດຈາກ ຂະແໜງການກະສິກຳ ແລະ ປ່າໄມ້.

ລັດຖະບານ ອະນຸຍາດນຳເຂົ້າຜະລິດຕະພັນຖ່ານ ສຳເລັດຮູບ ເພື່ອຕອບສະໜອງຄວາມຕ້ອງການໃນການນຳໃຊ້ພາຍໃນ ແຕ່ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດຈາກ ກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້.

ລັດຖະບານ ອະນຸຍາດໃຫ້ສົ່ງຜ່ານຖ່ານ ອັດເມັດ, ອັດແທ່ງ ແລະ ຖ່ານຂາວ ໂດຍໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 12 ການສົ່ງອອກ ຜະລິດຕະພັນຖ່ານ**

ລັດຖະບານ ສົ່ງເສີມການສົ່ງອອກຜະລິດຕະພັນຖ່ານ ອັດເມັດ, ອັດແທ່ງ ແລະ ຖ່ານຂາວ ແຕ່ຕ້ອງຂໍໃບອະນຸຍາດສົ່ງອອກ ຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມແບບພິມ ຄຍຖ 02 ເພື່ອສະດວກໃນການຕິດຕາມ ແລະ ເກັບກຳຂໍ້ມູນ. ລັດຖະບານ ບໍ່ອະນຸຍາດ ໃຫ້ສົ່ງອອກຖ່ານດຳ ໄປຕ່າງປະເທດ ຢ່າງເດັດຂາດ.

## ໝວດທີ 3
## ປະເພດ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ

**ມາດຕາ 13 ປະເພດໂຮງງານຜະລິດຖ່ານ**

ໂຮງງານຜະລິດຖ່ານ ໄດ້ແບ່ງອອກເປັນ ສອງ (2) ປະເພດ ດັ່ງນີ້:

1. ໂຮງງານຜະລິດຖ່ານ ອັດເມັດ;
2. ໂຮງງານຜະລິດຖ່ານ ອັດແທ່ງ.

**ມາດຕາ 14 ໂຮງງານຜະລິດຖ່ານ ອັດເມັດ**

ໂຮງງານຜະລິດຖ່ານ ອັດເມັດ ແມ່ນໂຮງງານທີ່ນໍາເອົາວັດຖຸດິບ ທີ່ເປັນ ໄມ້ນ້ອຍ, ເສດໄມ້, ເສດພືດ ແລະ ຂີ້ເລື່ອຍ ຈາກ ໂຮງງານປຸງແຕ່ງໄມ້ ແລະ ເສດວັດຖຸດິບອື່ນໆ ມາອັດເມັດເປັນເຊື້ອເພີງ ໂດຍນໍາໃຊ້ເຕັກນິກ ໃຫ້ໄດ້ຜະລິດຕະພັນຖ່ານອັດເມັດ.

**ມາດຕາ 15 ໂຮງງານຜະລິດຖ່ານ ອັດແທ່ງ**

ໂຮງງານຜະລິດຖ່ານ ອັດແທ່ງ ແມ່ນໂຮງງານທີ່ນໍາເອົາວັດຖຸດິບ ເສດຖ່ານ (ຖ່ານມຸ່ນ) ທີ່ໄດ້ຈາກການເຜົາ ເສດໄມ້, ເສດພືດ ແລະ ຂີ້ເລື່ອຍ ຈາກ ໂຮງງານປຸງແຕ່ງໄມ້ ແລະ ເສດວັດຖຸດິບອື່ນໆ ມາອັດແທ່ງເປັນເຊື້ອເພີງ ໂດຍນໍາໃຊ້ເຕັກນິກ ການປະສົມກັບທາດແປ້ງອື່ນ ເພື່ອໃຫ້ໄດ້ຜະລິດຕະພັນຖ່ານອັດແທ່ງ.

**ມາດຕາ 16 ປະເພດ ເຕົາເຜົາຖ່ານ**

ປະເພດເຕົາເຜົາຖ່ານ ໄດ້ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ເຕົາເຜົາຖ່ານຂາວ;
2. ເຕົາເຜົາຖ່ານດໍາ ແບບຊົ່ວຄາວ;
3. ເຕົາເຜົາຖ່ານດໍາ ແບບຄອບຄົວ.

**ມາດຕາ 17 ເຕົາເຜົາຖ່ານຂາວ**

ເຕົາເຜົາຖ່ານຂາວ ແມ່ນເຕົາ ທີ່ນໍາເອົາໄມ້ຈາກ ປ່າທໍາມະຊາດ ແລະ ປ່າປູກ ເປັນຊະນິດພັນສະເພາະເປັນຕົ້ນ ໄມ້ຕິ້ວ ເພື່ອນໍາມາເຜົາ ໂດຍນໍາໃຊ້ເຕັກນິກການເຜົາໃນອຸນຫະພູມ ແຕ່ ໜຶ່ງພັນ (1.000) ອົງສາເຊຂຶ້ນໄປ ມີຄຸນລັກສະນະແຂງແກ່ນ, ເວລາຈູດຈະບໍ່ມີຄວັນດໍາຫຼາຍ.

**ມາດຕາ 18 ເຕົາເຜົາຖ່ານດໍາ ແບບຊົ່ວຄາວ**

ເຕົາເຜົາຖ່ານດໍາ ແບບຊົ່ວຄາວ ແມ່ນເຕົາເຜົາຖ່ານທົ່ວໄປ ທີ່ນໍາເອົາໄມ້ທໍາມະຊາດ ຈາກ ເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດຫັນປ່ຽນທີ່ດິນປ່າໄມ້ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ຊຶ່ງໄດ້ຜ່ານການສໍາຫຼວດລະອຽດ, ມີໂກຕາຂຸດຄົ້ນໄມ້ ປະຈໍາປີ, ມີໃບອະນຸຍາດຂຸດຄົ້ນ, ມີສັນຍາ ຊື້-ຂາຍ ແລະ ປະຕິບັດພັນທະຄ່າຊົດເຊີຍພະຍາກອນທໍາມະຊາດ, ຄ່າອາກອນຕ່າງໆ ຕາມລະບຽບການທີ່ກ່ຽວຂ້ອງ ທີ່ກໍານົດໄວ້ໃນແຕ່ລະໄລຍະ.

ການຜະລິດຖ່ານດໍາ ອະນຸຍາດໃຫ້ຜະລິດເປັນສິນຄ້າຊົມໃຊ້ພາຍໃນ ແຕ່ບໍ່ອະນຸຍາດໃຫ້ສົ່ງອອກ, ພາຍຫຼັງຂຸດຄົ້ນໄມ້ໃນເຂດສະເພາະໂຄງການ ທີ່ຮັບອະນຸຍາດໝົດແລ້ວ ໃຫ້ຢຸດເຊົາ ຫຼື ຍຸບເລີກເຕົາເຜົາຖ່ານທັນທີ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງເຕົາເຜົາຖ່ານດໍາ ແບບຊົ່ວຄາວ ຢູ່ເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດຫັນປ່ຽນທີ່ດິນປ່າໄມ້ ຕ້ອງສະເໜີ ຫາ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຄົ້ນຄວ້າທາງດ້ານຫຼັກການ ເພື່ອພິຈາລະນາອະນຸຍາດສ້າງຕັ້ງເປັນອັນສະເພາະ ແລະ ແຕ່ງຕັ້ງຄະນະສະເພາະກິດຮັບຜິດຊອບ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ດໍາເນີນການເຜົາຖ່ານດໍາ.

ສໍາລັບ ການສ້າງຕັ້ງເຕົາເຜົາຖ່ານ ແບບຊົ່ວຄາວ ແມ່ນບໍ່ອະນຸຍາດໃຫ້ຕັ້ງຢູ່ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຢ່າງເດັດຂາດ.

**ມາດຕາ 19 ເຕົາເຜົາຖ່ານ ແບບຄອບຄົວ**

ເຕົາເຜົາຖ່ານ ແບບຄອບຄົວ ແມ່ນເຕົາເຜົາຖ່ານທົ່ວໄປ ທີ່ນໍາເອົາ ໄມ້ປູກ ແລະ ໄມ້ ຈາກປ່າຟື້ນຟູ ແລະ ປົກປັກຮັກສາ ຢູ່ໃນເນື້ອທີ່ດິນທີ່ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມາເຜົາ ແລະ ອະນຸຍາດໃຫ້ມີ ໜຶ່ງ ເຕົາ ຕໍ່ ຄອບຄົວ ເທົ່ານັ້ນ ເພື່ອຜະລິດຮັບໃຊ້ພາຍໃນຄອບຄົວ ແຕ່ບໍ່ອະນຸຍາດໃຫ້ຜະລິດເປັນສິນຄ້າ.

ສໍາລັບ ເຕົາເຜົາຖ່ານແບບຄອບຄົວ ບໍ່ຈໍາເປັນຕ້ອງຂໍອະນຸຍາດຕາມຂັ້ນຕອນ ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ຂະໜາດ, ມາດຕະຖານ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ

**ມາດຕາ 20 ຂະໜາດ ໂຮງງານຜະລິດຖ່ານ**

ໂຮງງານຜະລິດຖ່ານ ແບ່ງອອກເປັນ ສາມ (3) ຂະໜາດ ໂດຍຂຶ້ນກັບຈຳນວນແຮງງານ ຫຼື ກຳລັງແຮງລວມຂອງເຄື່ອງຈັກ ທີ່ນຳໃຊ້ຢູ່ພາຍໃນໂຮງງານ ແລະ ນອກສະຖານທີ່ໂຮງງານ ເປັນການກຳນົດຂະໜາດໂຮງງານ ດັ່ງນີ້:

1. ໂຮງງານຜະລິດຖ່ານ ອັດເມັດ ແລະ ອັດແທ່ງ ຂະໜາດໃຫຍ່ ແມ່ນ ໂຮງງານທີ່ມີຈຳນວນແຮງງານ 201 ຄົນຂຶ້ນໄປ ຫຼື ກຳລັງແຮງລວມຂອງເຄື່ອງຈັກ 201 ແຮງມ້າ;
2. ໂຮງງານຜະລິດຖ່ານ ອັດເມັດ ແລະ ອັດແທ່ງ ຂະໜາດກາງ ແມ່ນ ໂຮງງານມີຈຳນວນແຮງງານ 51 ຫາ 200 ຄົນ ຫຼື ກຳລັງແຮງລວມຂອງເຄື່ອງຈັກ 51 ແຮງມ້າ ຫາ 200 ແຮງມ້າ;
3. ໂຮງງານຜະລິດຖ່ານ ອັດເມັດ ແລະ ອັດແທ່ງ ຂະໜາດນ້ອຍ ແມ່ນ ໂຮງງານ ທີ່ມີຈຳນວນແຮງງານ 10 ຫາ 50 ຄົນ ຫຼື ກຳລັງແຮງລວມຂອງເຄື່ອງຈັກ 10 ແຮງມ້າ ຫາ 50 ແຮງມ້າ.

**ມາດຕາ 21 ເຕົາເຜົາຖ່ານຂາວ**

ເຕົາເຜົາຖ່ານຂາວ ແບ່ງອອກເປັນ ສາມ (3) ປະເພດຄຸ້ມຄອງ ໂດຍຂຶ້ນກັບຈຳນວນເຕົາທີ່ນຳໃຊ້ຢູ່ພາຍໃນສະຖານທີ່ ຂອບເຂດການກໍ່ສ້າງ ທີ່ໄດ້ກຳນົດໄວ້ ດັ່ງນີ້:

1. ເຕົາເຜົາຖ່ານຂາວ ຈຳນວນ 21 ເຕົາ ຂຶ້ນໄປ ຈັດເປັນປະເພດໃຫຍ່;
2. ເຕົາເຜົາຖ່ານຂາວ ຈຳນວນ 10-20 ເຕົາ ຈັດເປັນປະເພດກາງ;
3. ເຕົາເຜົາຖ່ານຂາວ ຈຳນວນ 02-09 ເຕົາ ຈັດເປັນປະເພດນ້ອຍ.

**ມາດຕາ 22 ມາດຕະຖານ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ມາດຕະຖານ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ແມ່ນການກຳນົດຄຸນລັກສະນະສະເພາະທາງດ້ານມາດຕະຖານເຕັກນິກຂອງໂຮງງານ ແລະ ຕ້ອງມີອົງປະກອບ ດັ່ງນີ້:

1. ສະຖານທີ່ຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
2. ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ;
3. ຂະບວນການຜະລິດ;
4. ການນຳໃຊ້ວັດຖຸດິບ;
5. ວິຊາການ ແລະ ກຳມະກອນ;
6. ສິ່ງແວດລ້ອມໂຮງງານ.

**ມາດຕາ 23 ມາດຕະຖານສະຖານທີ່ຕັ້ງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ອະນຸຍາດໃຫ້ຕັ້ງ ຢູ່ເຂດອຸດສາຫະກຳ ຫຼື ນິຄົມອຸດສາຫະກຳ, ເຂດທີ່ດິນທີ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ແຕ່ໃຫ້ຫ່າງຈາກ ເຂດຊຸມຊົນ, ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທຳ, ເຂດອະນຸລັກຊີວະນາໆພັນ, ແຫຼ່ງນ້ຳທຳມະຊາດ ໂດຍໄດ້ຮັບອະນຸຍາດຈາກ ພາກສ່ວນທີ່ກ່ຽວຂ້ອງ. ສຳລັບເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ບໍ່ອະນຸຍາດໃຫ້ຕັ້ງຢູ່ເຂດດັ່ງກ່າວ ຢ່າງເດັດຂາດ.

**ມາດຕາ 24 ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ**

ມາດຕະຖານ ອາຄານຜະລິດ ແລະ ສິ່ງປຸກສ້າງ ມີ ດັ່ງນີ້:

1. ໂຮງງານຜະລິດຖ່ານ ປະກອບມີ ອາຄານຜະລິດ ແລະ ສິ່ງປຸກສ້າງ ເປັນຕົ້ນ ອາຄານສຳລັບການຜະລິດ, ສາງ ຫຼື ບ່ອນເກັບມ້ຽນວັດຖຸດິບ, ສາງເກັບມ້ຽນຜະລິດຕະພັນ, ອາຄານສຳລັບການຄຸ້ມຄອງບໍລິຫານ, ອາຄານ

ຫ້ອງອາຫານ, ບ່ອນພັກຜ່ອນ, ບ່ອນຈອດລົດ, ຫ້ອງນ້ຳ, ລະບົບບຳບັດສິ່ງເສດເຫຼືອ ແລະ ອື່ນໆ;

2. ໂຄງສ້າງອາຄານຕ້ອງແໜ້ນໜາ ແລະ ເໝາະສົມກັບການດຳເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານໂຮງງານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

3. ຕ້ອງຕິດຕັ້ງ ລະບົບລະບາຍອາກາດ, ລະບົບດູດຝຸ່ນ ລະບົບໄຟຟ້າ ທີ່ຮັບປະກັນຄວາມປອດໄພ ເປັນຕົ້ນ ລະບົບໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ ແລະ ອື່ນໆ ຕາມຄວາມເໝາະສົມ.

ສຳລັບ ເຕົາເຜົາຖ່ານຂາວ ໂຄງສ້າງອາຄານ ຕ້ອງແໜ້ນໜາ, ມີສາງເກັບມ້ຽນວັດຖຸດິບ ແລະ ຜະລິດຕະພັນ, ມີບ່ອນພັກຜ່ອນ, ບ່ອນຈອດລົດ, ຫ້ອງນ້ຳ ທີ່ເໝາະສົມກັບການດຳເນີນກິດຈະການ. ແຜນຜັງການກໍ່ສ້າງອາຄານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 25 ມາດຕະຖານຂະບວນການຜະລິດ**

ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງມີມາດຕະຖານຂະບວນການຜະລິດ ດັ່ງນີ້:

1. ຂະບວນການຜະລິດ ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຕ້ອງເປັນລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ ເລີ່ມແຕ່ຂອດນຳວັດຖຸດິບເຂົ້າຜະລິດ ຈົນຮອດຂອດຜະລິດຕະພັນສຸດທ້າຍ, ທຸກຂອດການຜະລິດທີ່ເກີດມີສິ່ງເສດເຫຼືອ ຕ້ອງຕິດຕັ້ງລະບົບການກຳຈັດໃຫ້ໄດ້ມາດຕະຖານທີ່ກຳນົດໄວ້;

2. ພາຍໃນອາຄານໂຮງງານ ຫຼື ບ່ອນເຮັດວຽກ ຕ້ອງບໍ່ມີສິ່ງກີດຂວາງທາງຍ່າງ, ຕ້ອງໃສ່ປ້າຍເຕືອນ, ປ້າຍຊີ້ບອກຂະບວນການຜະລິດຢູ່ແຕ່ລະຂອດງານ ແລະ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ.

**ມາດຕາ 26 ມາດຕະຖານການນຳໃຊ້ວັດຖຸດິບ**

ການນຳໃຊ້ວັດຖຸດິບ ໄມ້ທຳມະຊາດ ເພື່ອມາທຳການຜະລິດຢູ່ໃນໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງຂໍອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້. ສຳລັບ ໄມ້ປູກ ທີ່ໄດ້ມີການຂຶ້ນທະບຽນ ຫຼື ໃບຢັ້ງຢືນ ແມ່ນບໍ່ຈຳເປັນຂໍອະນຸຍາດ. ສ່ວນຂະບວນການຜະລິດ ຕ້ອງໄດ້ມີການບັນທຶກໄມ້ສົ່ງເຂົ້າ ແລະ ຜະລິດຕະພັນຖ່ານສົ່ງອອກ ເພື່ອໃຫ້ຖືກຕ້ອງຕາມເປົ້າໝາຍຂອງການຜະລິດ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີ ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ.

**ມາດຕາ 27 ມາດຕະຖານ ວິຊາການ ແລະ ກຳມະກອນ**

ມາດຕະຖານ ວິຊາການ ແລະ ກຳມະກອນ ມີ ດັ່ງນີ້:

1. ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຮັບຮອງດ້ານເຕັກນິກວິຊາການ ທີ່ກ່ຽວຂ້ອງ ແລະ ມີປະສົບການປະຈຳຢູ່ໂຮງງານແຕ່ລະດ້ານ ຢ່າງໜ້ອຍໜຶ່ງຄົນ ແລະ ໄດ້ຮັບການຝຶກອົບຮົມຍົກລະດັບທາງດ້ານເຕັກນິກວິຊາການ ທັງພາຍໃນ ແລະ ຕ່າງປະເທດ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ;

2. ມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດສຸຂະພາບ ເປັນປົກກະຕິ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

**ມາດຕາ 28 ມາດຕະຖານສິ່ງແວດລ້ອມໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ທີ່ກໍ່ໃຫ້ເກີດມົນລະພິດ ແລະ ສິ່ງເສດເຫຼືອປະເພດຕ່າງໆ ເປັນຕົ້ນ ມົນລະພິດທາງອາກາດ, ຝຸ່ນລະອອງ, ຄວັນ, ກິ່ນຂີວ ຕ້ອງມີມາດຕະຖານສິ່ງແວດລ້ອມ ດັ່ງນີ້:

1. ກ່ອນດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງມີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;

2. ມີລະບົບບຳບັດ ຫຼື ກຳຈັດສິ່ງເສດເຫຼືອຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ທີ່ເປັນລະບົບມາດຕະຖານ;

3. ມົນລະພິດ ແລະ ສິ່ງເສດເຫຼືອ ທີ່ຈະປ່ອຍອອກຈາກໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງຢູ່ໃນເກນຄ່າມາດຕະຖານ ຈຶ່ງສາມາດປ່ອຍອອກຈາກໂຮງງານໄດ້.

## ໝວດທີ 5
## ການສ້າງຕັ້ງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

**ມາດຕາ 29 ການສະເໜີສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງສະເໜີເຈດຈຳນົງ ຫາຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້າເຫັນດີທາງດ້ານຫຼັກການ ຕາມການແບ່ງຂັ້ນຄຸ້ມຄອງ. ຫຼັງຈາກນັ້ນ ຈຶ່ງສາມາດໄປດຳເນີນການຂໍອະນຸຍາດ ອອກໃບທະບຽນວິສາຫະກິດ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ, ໃບຢັ້ງຢືນ ກ່ຽວກັບ ບົດວິພາກເສດຖະກິດ-ເຕັກນິກ ຈາກຂະແໜງການກະສິກຳ ແລະ ປ່າໄມ້, ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ໃບອະນຸຍາດປຸກສ້າງ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 30 ເງື່ອນໄຂໃນການສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ ທີ່ຖືກຕ້ອງຕາມກົດໝາຍ;
2. ມີງົບປະມານການລົງທຶນ, ເຄື່ອງຈັກ, ອັດຖຸປະກອນ ແລະ ພາຫະນະຮັບໃຊ້;
3. ມີວິຊາການ ທີ່ມີຄຸນວຸດທິການສຶກສາ, ເຄີຍຜ່ານງານ ແລະ ມີປະສົບການທີ່ກ່ຽວຂ້ອງກັບໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;
4. ມີພື້ນທີ່ສ້າງຕັ້ງໂຮງງານ ແລະ ເຕົາເຜົາຖ່ານ;
5. ມີພື້ນທີ່ປ່າຟື້ນຟູ ແລະ ປ່າປູກ ເປັນຂອງຕົນເອງ ແຕ່ລະໂຮງງານ ແລະ ເຕົາເຜົາຖ່ານ ຢ່າງໜ້ອຍ ຫ້າເຮັກຕາຂຶ້ນໄປ ເພື່ອຮັບປະກັນໃຫ້ມີແຫຼ່ງວັດຖຸດິບ ທີ່ພຽງພໍ ແລະ ຖືກຕ້ອງຕາມກົດໝາຍ ໂດຍບໍ່ໃຫ້ອີງໃສ່ວັດຖຸດິບຈາກປ່າທຳມະຊາດ ເປັນຕົ້ນຕໍ;
6. ມີເງື່ອນໄຂອື່ນໆ ໃນການດຳເນີນກິດຈະການສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ.

**ມາດຕາ 31 ເອກະສານ ຂໍອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການຂໍອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງງານ ແລະ ເຕົາເຜົາຖ່ານຂາວ ຕາມແບບພິມ ຮງຖ/ຕຖ 01;
2. ສຳເນົາ ໃບຢັ້ງຢືນ ກ່ຽວກັບ ບົດວິພາກເສດຖະກິດ-ເຕັກນິກ;
3. ສຳເນົາ ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບມອບກຳມະສິດທີ່ດິນ ຫຼື ໃບຕາດິນ ແລະ ທີ່ດິນປ່າປູກ;
4. ສຳເນົາ ໃບອະນຸຍາດປຸກສ້າງ;
5. ສຳເນົາ ໃບທະບຽນວິສາຫະກິດ;
6. ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;
7. ສຳເນົາ ໃບຢັ້ງຢືນການມອບອາກອນຕ່າງໆ;
8. ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;
9. ສຳເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມໂຮງງານ.

**ມາດຕາ 32 ບົດວິພາກເສດຖະກິດ-ເຕັກນິກ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການສ້າງບົດວິພາກເສດຖະກິດ-ເຕັກນິກ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງປະກອບດ້ວຍບັນດາເນື້ອໃນຕ່າງໆ ດັ່ງນີ້:

**1. ສະພາບລວມໂຄງການ**

1) ທີ່ຕັ້ງຂອງໂຄງການ;

2) ເຫດຜົນການສະເໜີໂຄງການ;
3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.

**2. ເຕັກນິກການກໍ່ສ້າງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

1) ສະຖານທີ່ສ້າງຕັ້ງໂຮງງານ ແລະ ເຕົາເຜົາຖ່ານ;
2) ແຜນການປຸກສ້າງອາຄານໂຮງງານ, ເຕົາເຜົາຖ່ານ ແລະ ອາຄານອື່ນ;
3) ແຜນການນຳໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;
4) ແຜນການນຳໃຊ້ວັດຖຸດິບ;
5) ແຜນວາດຂະບວນການຜະລິດ ແລະ ບົດອະທິບາຍ;
6) ການຄຸ້ມຄອງດ້ານສິ່ງແວດລ້ອມ;
7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານ ແລະ ເຕົາເຜົາຖ່ານ;
8) ສະຫວັດດີການສັງຄົມຂອງໂຮງງານ;
9) ສຳເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
10) ແຜນງົບປະມານ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກລັດ ຈັດຕັ້ງປະຕິບັດວຽກງານໃນການ ຊຸກຍູ້, ຕິດຕາມ ແລະ ກວດກາ ຢ່າງເປັນປົກກະຕິ ເປັນແຕ່ລະໄລຍະ.

**3. ພາກເສດຖະກິດ**

1) ຕົ້ນທຶນການຜະລິດ;
2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ຜົນກຳໄລ;
3) ແຜນການຜະລິດ ແລະ ການຈຳໜ່າຍ;
4) ແຜນການນຳໃຊ້ແຮງງານ.

**4. ຄາດຄະເນຜົນໄດ້ຮັບຈາກໂຄງການ**

1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);
2) ການວິເຄາະຄວາມສ່ຽງ ໃນການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ.

**ມາດຕາ 33 ຂັ້ນຕອນການສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ພາຍຫຼັງ ທີ່ໄດ້ຮັບເອກະສານຄົບຊຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້ ແລ້ວ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກວດກາເນື້ອໃນບົດວິພາກເສດຖະກິດ-ເຕັກນິກ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
2. ປະສານກັບຂະແໜງການທີ່ກ່ຽວຂ້ອງ ກວດກາສະຖານທີ່ຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
3. ພິຈາລະນາອອກ ຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;
4. ໃຫ້ກໍ່ສ້າງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ພາຍຫຼັງມີ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດ ສ້າງຕັ້ງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
5. ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາ ການສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ.

**ມາດຕາ 34 ການກວດກາສະຖານທີ່ຕັ້ງໂຮງງານຜະລິດຖ່ານ**

**ກ. ໂຮງງານຂະໜາດ ໃຫຍ່**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາ ສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;

4. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
5. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
6. ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານ ທີ່ກຳນົດໄວ້ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້. ຜູ້ລົງກວດກາຕ້ອງລົງລາຍເຊັນໃນບົດບັນທຶກ, ເນື້ອໃນການກວດກາ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ໃນແຕ່ລະໄລຍະ.

**ຂ. ໂຮງງານຂະໜາດ ກາງ ແລະ ນ້ອຍ**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາສະຖານທີ່ຕັ້ງໂຮງງານ ຊຶ່ງການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າ ຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
3. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
5. ອົງການປົກຄອງບ້ານ ບ່ອນທີ່ໂຮງງານຕັ້ງຢູ່.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານທີ່ກຳນົດໄວ້ ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້. ຜູ້ລົງກວດກາຕ້ອງລົງລາຍເຊັນໃນບົດບັນທຶກ, ເນື້ອໃນການກວດກາ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ໃນແຕ່ລະໄລຍະ.

**ມາດຕາ 35 ການກວດກາສະຖານທີ່ຕັ້ງເຕົາເຜົາຖ່ານຂາວ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ເພື່ອກວດກາສະຖານທີ່ຕັ້ງເຕົາເຜົາຖ່ານຂາວ ໃນການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
3. ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
5. ອົງການປົກຄອງບ້ານ ບ່ອນທີ່ເຕົາເຜົາຖ່ານຕັ້ງຢູ່.

ສຳລັບ ການລົງກວດກາເຕົາເຜົາຖ່ານຂາວ ປະເພດ ໃຫຍ່, ກາງ ແລະ ນ້ອຍ ແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງ ຈຸດທີ່ຕັ້ງເຕົາເຜົາຖ່ານ, ສະພາບແວດລ້ອມອ້ອມຂ້າງເຕົາເຜົາຖ່ານ ຕາມມາດຕະຖານເຕົາເຜົາຖ່ານ ທີ່ກຳນົດໄວ້ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້. ຜູ້ລົງກວດກາ ຕ້ອງລົງລາຍເຊັນໃນບົດບັນທຶກ, ເນື້ອໃນການກວດກາ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ໃນແຕ່ລະໄລຍະ.

**ມາດຕາ 36 ການອອກຂໍ້ຕົກລົງ ອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ພາຍຫຼັງສຳເລັດ ການກວດກາສະຖານທີ່ຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕ້ອງມີບົດບັນທຶກການກວດກາໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ທີ່ເຫັນດີໃຫ້ດຳເນີນການສ້າງຕັ້ງໂຮງງານ, ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກ ຂໍ້ຕົກລົງ ວ່າດ້ວຍ ການອະນຸຍາດສ້າງຕັ້ງໂຮງງານ ແລະ ເຕົາເຜົາຖ່ານ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນເຊັນບົດບັນທຶກການກວດກາໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ການອະນຸຍາດ ສ້າງຕັ້ງໂຮງງານຜະລິດຖ່ານ**

1. ການອະນຸຍາດ ສ້າງຕັ້ງໂຮງງານຜະລິດຖ່ານ ຂະໜາດໃຫຍ່ ແມ່ນກະຊວງກະສິກຳ ແລະ ປ່າໄມ້ ຕາມແບບພິມ ຮງຖ 02;

2. ການອະນຸຍາດ ສ້າງຕັ້ງໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ ແມ່ນພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ໂດຍການເຫັນດີ ຈາກ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມແບບພິມ ຮງຖ/ຕຖ 03.

**ຂ. ການອະນຸຍາດ ສ້າງຕັ້ງເຕົາເຜົາຖ່ານຂາວ**

ການອະນຸຍາດ ສ້າງຕັ້ງເຕົາເຜົາຖ່ານຂາວ ປະເພດໃຫຍ່, ກາງ ແລະ ນ້ອຍ ແມ່ນພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໂດຍການເຫັນດີ ຈາກ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ຕາມແບບພິມ ຮງຖ/ຕຖ 03.

## ໝວດທີ 6
## ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

**ມາດຕາ 37 ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ແມ່ນການດຳເນີນກິດຈະການໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ໂດຍຜ່ານການຄົ້ນຄວ້າ, ກວດກາ ແລະ ພິຈາລະນາ ອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 38 ການຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານ, ເຕົາເຜົາຖ່ານຂາວ ແລະ ການຜະລິດທົດລອງ**

ການກໍ່ສ້າງໂຮງງານຜະລິດຖ່ານ ທີ່ສຳເລັດແລ້ວ ເຊັ່ນ: ການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບປ້ອງກັນຄວາມປອດໄພ, ສຸຂານາໄມ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆ ພາຍໃນໂຮງງານທີ່ສຳເລັດຮຽບຮ້ອຍແລ້ວ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ຕາມທີ່ສະເໜີໄວ້ໃນ ບົດວິພາກເສດຖະກິດ-ເຕັກນິກ ໂຮງງານ.

ການກໍ່ສ້າງເຕົາເຜົາຖ່ານຂາວ ທີ່ສຳເລັດແລ້ວ ເຊັ່ນ: ການກໍ່ສ້າງເຕົາເຜົາຖ່ານ, ໂຮງເຮືອນ, ບ່ອນເກັບມ້ຽນວັດຖຸດິບ ແລະ ການຕິດຕັ້ງເຄື່ອງຈັກໂຕະຊອຍ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ຕາມທີ່ສະເໜີໄວ້ໃນ ບົດວິພາກເສດຖະກິດ-ເຕັກນິກ ເຕົາເຜົາຖ່ານຂາວ.

ການຜະລິດທົດລອງ ແມ່ນຂະບວນການຜະລິດຖ່ານ ເພື່ອກວດສອບຄວາມພ້ອມ ຕາມມາດຕະຖານເຕັກນິກ, ປະສິດທິພາບຂອງໂຮງງານ ແລະ ເຕົາເຜົາຖ່ານ ແລະ ຄຸນນະພາບຂອງສິນຄ້າ ລວມທັງລະບົບຄວາມປອດໄພ, ລະບົບການກຳຈັດສິ່ງເສດເຫຼືອ ແລະ ມົນລະພິດຕ່າງໆ. ສຳລັບການຜະລິດທົດລອງ ໃຊ້ເວລາສູງສຸດບໍ່ໃຫ້ເກີນ ສາມສິບ ວັນ ກ່ອນການສະເໜີຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ຂາຍ ຜະລິດຕະພັນ ຢ່າງເດັດຂາດ.

**ມາດຕາ 39 ການປະກອບເອກະສານ ເພື່ອສະເໜີຂໍໃບຢັ້ງຢືນ ການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການສະເໜີຂໍໃບຢັ້ງຢືນການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ປະກອບມີເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຕາມແບບພິມ ຮງຖ/ຕຖ 04;
2. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
3. ແຜນວາດຂະບວນການຜະລິດ, ພ້ອມທັງບົດອະທິບາຍ;
4. ລາຍການເຄື່ອງຈັກໃນໂຮງງານ ແລະ ເຕົາເຜົາຖ່ານ;

5. ແຜນການເຄື່ອນໄຫວ ປະຈໍາປີ;
6. ຮູບຖ່າຍ ຂະໜາດ 3x4 ຊັງຕີແມັດ ຈໍານວນ ສີ່ ໃບ (ຮູບຖ່າຍຕ້ອງບໍ່ເກີນ ສາມ ເດືອນ);
7. ສໍາເນົາ ໃບທະບຽນວິສາຫະກິດ;
8. ສໍາເນົາ ໃບຢັ້ງຢືນ ການມອບອາກອນຕ່າງໆ;
9. ສໍາເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ;
10. ສໍາເນົາ ໃບອະນຸຍາດປຸກສ້າງ;
11. ສໍາເນົາ ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ (Passport);
12. ສໍາເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສໍາປະທານທີ່ດິນ.

**ມາດຕາ 40 ການຄົ້ນຄວ້າເອກະສານ**

ພາຍຫຼັງ ໄດ້ຮັບເອກະສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຊຸດເອກະສານ. ໃນກໍລະນີ ເອກະສານບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີ ຊາບ ພາຍໃນ ຫ້າ ວັນລັດຖະການ.

**ມາດຕາ 41 ການລົງກວດກາ ແລະ ປະເມີນໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ເພື່ອພິຈາລະນາອອກໃບຢັ້ງຢືນການດໍາເນີນກິດຈະການ**

ພາຍຫຼັງ ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 39 ຂອງຂໍ້ຕົກລົງສະບັບນີ້ ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກໍາມະການ ເພື່ອກວດກາ ແລະ ປະເມີນຜົນ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕາມມາດຕະຖານ-ເຕັກນິກ ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານຂາວ ແລະ ບົດວິພາກເສດຖະກິດ-ເຕັກນິກ, ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກໄວ້ທຸກຄັ້ງ ເພື່ອເປັນຫຼັກຖານ.

ໃນກໍລະນີ ການກວດກາຫາກເຫັນວ່າ ຂະບວນການຜະລິດບໍ່ສາມາດດໍາເນີນການຜະລິດຕາມມາດຕະຖານ-ເຕັກນິກ ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານຂາວ ແລະ ບໍ່ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ. ຄະນະກໍາມະການ ຕ້ອງໃຫ້ການແນະນໍາ ເພື່ອປັບປຸງ ແລະ ແກ້ໄຂ ພາຍໃນເວລາທີ່ກໍານົດໄວ້ ພ້ອມທັງເຮັດບົດບັນທຶກຜົນການກວດກາ ແລະ ລົງລາຍເຊັນຮ່ວມກັບເຈົ້າຂອງໂຮງງານ. ພາຍຫຼັງເຈົ້າຂອງໂຮງງານ ໄດ້ປັບປຸງ ແລະ ແກ້ໄຂ ຕາມການແນະນໍາໃນບົດບັນທຶກແລ້ວ ໃຫ້ສະເໜີຕໍ່ ຂະແໜງການກະສິກໍາ ແລະ ປ່າໄມ້ ເພື່ອກວດກາຄືນ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 42 ການພິຈາລະນາ ອອກໃບຢັ້ງຢືນການດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ພາຍຫຼັງ ໄດ້ຮັບເອກະສານຄົບຖ້ວນ, ຖືກຕ້ອງ, ໄດ້ກວດກາ ໂຮງງານຜະລິດຖ່ານ, ເຕົາເຜົາຖ່ານຂາວ ແລະມີບົດບັນທຶກກວດກາໂຮງງານແລ້ວ ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບຢັ້ງຢືນດໍາເນີນກິດຈະການໂຮງງານ ແລະ ເຕົາເຜົາຖ່ານຂາວ ພາຍໃນ ຫ້າ ວັນລັດຖະການ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ການພິຈາລະນາ ອອກໃບຢັ້ງຢືນການດໍາເນີນກິດຈະການໂຮງງານຜະລິດຖ່ານ**

1. ກົມປ່າໄມ້ ເປັນຜູ້ອອກໃບຢັ້ງຢືນດໍາເນີນກິດຈະການໂຮງງານຜະລິດຖ່ານ ຂະໜາດໃຫຍ່ ຕາມແບບພິມ ຮງຖ 05;

2. ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອອກໃບຢັ້ງຢືນ ດໍາເນີນກິດຈະການໂຮງງານຜະລິດຖ່ານ ຂະໜາດກາງ ແລະ ຂະໜາດນ້ອຍ ຕາມແບບພິມ ຮງຖ/ຕຖ 06.

**ຂ. ການພິຈາລະນາ ອອກໃບຢັ້ງຢືນດໍາເນີນກິດຈະການ ເຕົາເຜົາຖ່ານຂາວ**

ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເປັນຜູ້ອອກໃບຢັ້ງຢືນ ດໍາເນີນກິດຈະການເຕົາເຜົາຖ່ານຂາວ ປະເພດ ໃຫຍ່, ກາງ ແລະ ນ້ອຍ ຕາມແບບພິມ ຕຜຖ/ຕຖ 06;

ໃບອະນຸຍາດດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ມີອາຍຸ ສອງ ປີ ແລະ ສາມາດຕໍ່ອາຍຸໄດ້, ຕ້ອງເກັບມ້ຽນໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດ ຂອງຕົນ.

**ມາດຕາ 43 ການຕໍ່ອາຍຸໃບອະນຸຍາດ ການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ທີ່ມີຈຸດປະສົງຕໍ່ອາຍຸ ໃບອະນຸຍາດດຳເນີນກິດຈະການ ຕ້ອງສະເໜີ ຫາຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນ ສາມສິບ ວັນ ກ່ອນໃບອະນຸຍາດຈະໝົດອາຍຸ ໂດຍປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ອາຍຸ ໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕາມແບບພິມ ຮງຖ/ຕຖ 04;
2. ໜັງສືລາຍງານການດຳເນີນກິດຈະການ ໂຮງງານຜະລິດຖ່ານ/ເຕົາເຜົາຖ່ານ ຕາມແບບພິມ ຮງຖ/ຕຖ 07;
3. ປະກອບເອກະສານ ຕາມມາດຕາ 39 ຂອງຂໍ້ຕົກລົງສະບັບນີ້ ແລະ ລົງກວດກາເບິ່ງພື້ນທີ່ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕົວຈິງ ແລະ ເຮັດບົດບັນທຶກຜົນການລົງກວດກາ.

ພາຍຫຼັງ ໄດ້ປະຕິບັດຄົບຖ້ວນຕາມຂັ້ນຕອນແລ້ວ ຂະແໜງການການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາ ຕໍ່ອາຍຸ ໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕາມການແບ່ງຂັ້ນຄຸ້ມຄອງ ຕາມແບບພິມ ຮງຖ 08 ແລະ ຮງຖ/ຕຖ 09.

ການຕໍ່ອາຍຸ ໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ມີອາຍຸ ສອງ ປີ ຍົກເວັ້ນກໍລະນີມີການເຊົ່າທີ່ດິນປຸກສ້າງ ແມ່ນໃຫ້ຕໍ່ອາຍຸຕາມກຳນົດເວລາທີ່ຍັງເຫຼືອໃນສັນຍາເຊົ່າທີ່ດິນ.

**ມາດຕາ 44 ການໂຈະ ແລະ ຍົກເລີກ ໃບອະນຸຍາດການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ໃບອະນຸຍາດການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຈະຖືກໂຈະ ແລະ ຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
2. ດຳເນີນທຸລະກິດບໍ່ຖືກຕ້ອງ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ມີການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການໂຈະ ໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ແມ່ນໃຫ້ຜູ້ດຳເນີນກິດຈະການ ປັບປຸງ ແລະ ແກ້ໄຂ ໃນເວລາໃດໜຶ່ງທີ່ແນ່ນອນ ໂດຍຂະແໜງການກະສິກຳ ແລະ ປ່າໄມ້ ເປັນຜູ້ແຈ້ງຕໍ່ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຊາບ.

ໃນກໍລະນີ ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ບໍ່ປະຕິບັດຕາມແຈ້ງການ, ຂະແໜງການກະສິກຳ ແລະ ປ່າໄມ້ ມີສິດຍົກເລີກ ໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 45 ການຂໍໃບອະນຸຍາດການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຄືນໃໝ່**

ໃນກໍລະນີ ໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການ ຕ້ອງແຈ້ງຕໍ່ອົງການປົກຄອງທ້ອງຖິ່ນ ຕາມລະບຽບການ ພ້ອມທັງຍື່ນໃບຄຳຮ້ອງ ຫາຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໃບຢັ້ງຢືນແຈ້ງເສຍຫາຍ ຈາກອົງການປົກຄອງທ້ອງຖິ່ນ ເພື່ອສະເໜີອອກໃບອະນຸຍາດ ຄືນໃໝ່.

**ມາດຕາ 46 ຄ່າທຳນຽມ ອອກໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ຄ່າທຳນຽມ ອອກໃບອະນຸຍາດດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ, ຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ແລະ ໃບອະນຸຍາດດຳເນີນກິດຈະ

ການ ຄືນໃໝ່ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ກ່ຽວກັບ ຄ່າທໍານຽມ ແລະ ຄ່າບໍລິການ ໃນແຕ່ລະໄລຍະ.

## ໝວດທີ 7
## ການປ່ຽນແປງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

**ມາດຕາ 47 ການປ່ຽນແປງກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການປ່ຽນແປງກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
2. ການຍົກຍ້າຍໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
3. ການຍົກຍ້າຍເຄື່ອງຈັກ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
5. ການສືບທອດການດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ;
6. ການປ່ຽນຊື່ ຫຼື ປ່ຽນຜູ້ດໍາເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ.

**ມາດຕາ 48 ການຂະຫຍາຍໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການຂະຫຍາຍໂຮງງານ ມີ ສາມ (3) ຮູບການ ຄື ການເພີ່ມເຄື່ອງຈັກ, ການເພີ່ມເນື້ອທີ່ອາຄານຜະລິດ ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ມີ ດັ່ງນີ້:

**1. ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກມີ ສອງ ກໍລະນີ ດັ່ງນີ້:**

ກໍລະນີທີ ໜຶ່ງ: ໂຮງງານຜະລິດຖ່ານ ທີ່ມີກໍາລັງແຮງມ້າ, ຖ້າໂຮງງານ ເພີ່ມກໍາລັງແຮງມ້າຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າ ເປັນການຂະຫຍາຍໂຮງງານ.

ກໍລະນີທີ ສອງ: ໂຮງງານຜະລິດຖ່ານ ທີ່ມີກໍາລັງແຮງມ້າຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນ ເກີນກວ່າ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກໍາລັງແຮງມ້າຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ແຮງມ້າ ຂຶ້ນໄປ ຖືວ່າ ເປັນການຂະຫຍາຍໂຮງງານ.

**2. ການຂະຫຍາຍໂຮງງານ ແລະ ເຕົາເຜົາຖ່ານຂາວ ໂດຍການເພີ່ມເນື້ອທີ່ອາຄານ ແລະ ເຕົາເຜົາຖ່ານ ມີ ສາມ ກໍລະນີ ດັ່ງນີ້:**

ກໍລະນີທີ ໜຶ່ງ: ອາຄານຜະລິດຂອງໂຮງງານ ແລະ ເຕົາເຜົາຖ່ານຂາວ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າ ເປັນການຂະຫຍາຍໂຮງງານ.

ກໍລະນີທີ ສອງ: ອາຄານຜະລິດຂອງໂຮງງານ ແລະ ເຕົາເຜົາຖ່ານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນ ເກີນກວ່າ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ໜຶ່ງຮ້ອຍ ຕາແມັດຂຶ້ນໄປ ຖືວ່າ ເປັນການຂະຫຍາຍໂຮງງານ.

ກໍລະນີທີ ສາມ: ເຕົາເຜົາຖ່ານ ທີ່ມີຈໍານວນເຕົາ ຈາກການອະນຸມັດໃນເບື້ອງຕົ້ນ ເກີນກວ່າ ສອງ ເຕົາ ຖືວ່າເປັນການຂະຫຍາຍເຕົາ.

ຜູ້ດໍາເນີນກິດຈະການໂຮງງານ ແລະ ເຕົາເຜົາຖ່ານຂາວ ສາມາດຂະຫຍາຍຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດ ຕາມຂັ້ນຕອນຄືກັນກັບການຂໍດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ໃນສ່ວນທີ່ຂະຫຍາຍ.

**ມາດຕາ 49 ການຍົກຍ້າຍໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ຜູ້ດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ສາມາດຍົກຍ້າຍໄປຕັ້ງຢູ່ສະຖານທີ່ອື່ນໄດ້, ແຕ່ຕ້ອງໄດ້ດັດແກ້ບັນດາເອກະສານທີ່ກ່ຽວຂ້ອງກັບການສ້າງຕັ້ງ ແລະ ດໍາເນີນກິດຈະການໂຮງງານຜະລິດ

ຖ່ານ ແລະ ເຕົາເຜົາຖ່ານຂາວ ຢູ່ສະຖານທີ່ໃໝ່. ໃນນີ້ ສະຖານທີ່ຕັ້ງໂຮງງານ ແລະ ເຕົາເຜົາຖ່ານ ບ່ອນໃໝ່ ຕ້ອງປະຕິບັດເງື່ອນໄຂຂໍອະນຸຍາດສ້າງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ແລະ ການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມມາດຕາ 39 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍຕ້ອງສະເໜີຂໍຢຸດເຊົາ ແລະ ຍຸບເລີກໂຮງງານ ແລະ ເຕົາເຜົາຖ່ານ ຫຼັງເດີມ ຫາຂະແໜງການກະສິກຳ ແລະ ປ່າໄມ້.

### ມາດຕາ 50 ການຍົກຍ້າຍເຄື່ອງຈັກໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ ສອງ ຮູບການ ຄື ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຫຼື ບາງສ່ວນ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຫຼື ບາງສ່ວນຢູ່ພາຍໃນໂຮງງານ ໄປສະຖານທີ່ອື່ນເປັນການຊົ່ວຄາວ ໃຫ້ຍື່ນໃບສະເໜີ ຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ, ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຕ້ອງເອົາກັບຄືນ ພາຍໃນ ໜຶ່ງ ປີ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ, ກໍລະນີຫາກມີຄວາມຈຳເປັນຕ້ອງການນຳໃຊ້ເກີນ ໜຶ່ງ ປີ ສາມາດສະເໜີຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ໂດຍຊີ້ແຈງເຫດຜົນໃຫ້ລະອຽດ ເພື່ອຂໍຕໍ່ກຳນົດເວລາ ແຕ່ສູງສຸດຕໍ່ໄດ້ບໍ່ໃຫ້ເກີນ ໜຶ່ງ ປີ, ພ້ອມນີ້ຕ້ອງລະບຸເງື່ອນໄຂ ຫຼື ວິທີການ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງເຄື່ອງຈັກ;

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານ ຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ, ໃນນັ້ນຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ ສິບຫ້າ ວັນ. ສຳລັບ ເຕົາເຜົາຖ່ານຂາວ ແມ່ນບໍ່ຈຳເປັນຕ້ອງເຄື່ອນຍ້າຍເຄື່ອງຈັກ.

### ມາດຕາ 51 ການໂອນ, ໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

ການໂອນ, ໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ໃຫ້ຜູ້ອື່ນ ພາຍຫຼັງສິ້ນສຸດຂັ້ນຕອນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງແລ້ວ ຜູ້ດຳເນີນກິດຈະການຜູ້ເກົ່າ ຕ້ອງລາຍງານໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້ ພາຍໃນ ສິບຫ້າ ວັນ ນັບແຕ່ວັນໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍ ກິດຈະການ ເປັນຕົ້ນໄປ.

ຜູ້ໄດ້ຮັບການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນການດຳເນີນກິດຈະການ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການ ຈາກເຈົ້າຂອງເດີມ ມາເປັນຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການ ພາຍໃນ ສາມສິບ ວັນ ນັບແຕ່ວັນເຊັນສັນຍາການໂອນ, ເຊົ່າ ຫຼື ຊື້ ກິດຈະການດັ່ງກ່າວ.

### ມາດຕາ 52 ການສືບທອດການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

ໃນກໍລະນີ ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ຊາບ ພາຍໃນ ຫົກສິບ ວັນ ນັບແຕ່ວັນຜູ້ດຳເນີນກິດຈະການໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ໂດຍປ່ຽນຊື່ ຈາກ ຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງ ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ໄດ້ເສຍຊີວິດເກີນ ເກົ້າສິບ ວັນ ຫາກບໍ່ມີຜູ້ສະເໜີຂໍສືບທອດ ຖືວ່າໃບຢັ້ງຢືນການດຳເນີນກິດຈະການນັ້ນ ໄດ້ໝົດອາຍຸລົງ. ຖ້າຫາກມີຜູ້ສືບທອດ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໃໝ່.

**ມາດຕາ 53 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ສາມາດປ່ຽນຊື່ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຫຼື ປ່ຽນຜູ້ດຳເນີນກິດຈະການໄດ້ ຕ້ອງສະເໜີ ຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ຫຼື ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕາມການແບ່ງຂັ້ນຄຸ້ມຄອງ.

## ໝວດທີ 8
## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ

**ມາດຕາ 54 ສິດ ຂອງຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ**

ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ມີ ສິດ ດັ່ງນີ້:

1. ເປັນເຈົ້າກຳມະສິດໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ, ມີຜົນປະໂຫຍດ ທີ່ໄດ້ຮັບຈາກການດຳເນີນກິດຈະການ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ເຄື່ອນໄຫວດຳເນີນກິດຈະການ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;
4. ສະເໜີ ຂໍນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳ ຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບ ການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;
5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້, ຂາຍ, ຂະຫຍາຍການດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ, ຢຸດເຊົາກິດຈະການ ຕາມລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
7. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 55 ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ**

ຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ໃບຢັ້ງຢືນການດຳເນີນກິດຈະການ;
2. ຜູ້ປະກອບການ ທີ່ ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຕ້ອງມີປ່າປູກເປັນຂອງຕົນເອງ ເພື່ອຮັບປະກັນ ການຕອບສະໜອງວັດຖຸດິບ ໃຫ້ມີຄວາມຍືນຍົງ;
3. ປະຕິບັດຕາມລະບຽບການ ກ່ຽວກັບ ການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ສະຫວັດດີການ ສັງຄົມ, ອຸປະກອນປ້ອງກັນຄວາມປອດໄພ ແລະ ອື່ນໆ;

4. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ສານເຄມີ ແລະ ໄພພິບັດ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;

5. ລາຍງານ ການເກີດອຸບປະຕິເຫດ ຂັ້ນຮ້າຍແຮງ ຢູ່ພາຍໃນໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໃຫ້ຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

6. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານ ແລະ ເຕົາຖ່ານ ທີ່ຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;

7. ລາຍງານ ແລະ ສະເໜີຂໍ້ມູນ ກ່ຽວກັບ ການເຄື່ອນໄຫວ ຂອງໂຮງງານ ແລະ ເຕົາເຜົາຖ່ານໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ;

8. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງກະສິກໍາ ແລະ ປ່າໄມ້;

9. ກ່ອນຢຸດເຊົາດໍາເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຖາວອນ ຕ້ອງໄດ້ກໍາຈັດ ຫຼື ບໍາບັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

10. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມ ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ລັດ;

11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ຂໍ້ຫ້າມ

### ມາດຕາ 56 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ອອກ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ທີ່ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງ ໃນທຸກຮູບແບບ ຕໍ່ກັບ ການສົ່ງເສີມ ແລະ ພັດທະນາ ວຽກງານໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;

3. ອະນຸຍາດ ທຸກຮູບແບບ ໃຫ້ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ເຄື່ອນໄຫວກິດຈະການ ທີ່ບໍ່ມີໃບຢັ້ງຢືນດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ທີ່ຜິດກົດໝາຍ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ຕໍ່ ກົດໝາຍ ແລະ ລະບຽບການ.

### ມາດຕາ 57 ຂໍ້ຫ້າມ ສໍາລັບຜູ້ດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ

ຫ້າມ ຜູ້ດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ມີພຶດຕິກໍາ ດັ່ງນີ້:

1. ສ້າງຕັ້ງ, ຍົກຍ້າຍ, ດໍາເນີນກິດຈະການ ແລະ ຂະຫຍາຍໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຢູ່ໃນເຂດ ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຫຼື ເຂດຫວງຫ້າມເດັດຂາດ;

3. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ;

4. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບ ໃບຢັ້ງຢືນດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;

5. ນໍາເຂົ້າວັດຖຸດິບ, ເຄື່ອງຈັກ ຫຼື ແຮງງານ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ;

6. ນໍາເຂົ້າ ຫຼື ນໍາໃຊ້ ທາດສານເຄມີ ທີ່ເປັນອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;

7. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ ກວດກາໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໄດ້ນຳໃຊ້ໜີບໃສ່ເຄື່ອງຈັກໃຫ້ຢຸດເຊົາການເຄື່ອນໄຫວ;

8. ປ່ຽນຊື່ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ຂະແໜງການກະສິກຳ ແລະ ປ່າໄມ້;

9. ປອມແປງເອກະສານ, ປົກປັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

10. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການກຳຈັດ ຫຼື ບຳບັດ ທີ່ບໍ່ໄດ້ຕາມມາດຕະຖານ ຂອງລະບຽບການ ທີ່ກຳນົດໄວ້ ໃນແຕ່ລະໄລຍະ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ຕໍ່ ກົດໝາຍ ແລະ ລະບຽບການ.

**ມາດຕາ 58 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ, ຖ່ວງດຶງ ຫຼື ຮຽກເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ບຸກຄົນ;

2. ເປີດເຜີຍຄວາມລັບ ຂອງ ລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ປອມແປງເອກະສານ ຫຼື ອອກເອກະສານ ບໍ່ຖືກຕ້ອງ;

4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈົມຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ບໍ່ຖືກຕ້ອງຕາມລະບຽບການ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

**ມາດຕາ 59 ອົງການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ**

ອົງການຄຸ້ມຄອງ ແລະ ກວດກາ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ປະກອບມີ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້;
2. ຂັ້ນແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້;
3. ຂັ້ນເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ກົມປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ໃຫ້ຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ;

2. ຄົ້ນຄວ້າ ນຳສະເໜີ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ຂະໜາດໃຫຍ່;

3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດຖ່ານ ຂະໜາດໃຫຍ່;

4. ພິຈາລະນາ ຮັບຮອງແຜນການນຳເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອບກໍ່ສ້າງໂຮງງານ ທີ່ນຳເຂົ້າມາໃຊ້ໃນໂຮງງານຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ທັນສະໄໝ ແລະ ຖືກຕ້ອງຕາມເປົ້າໝາຍຂອງການດຳເນີນກິດຈະການ ໂດຍສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ໂຮງງານຂະໜາດໃຫຍ່;

5. ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເພື່ອຕິດຕາມ, ກວດກາ ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມ ໂຮງງານຜະລິດຖ່ານ, ໄມ້ສິ້ນເຊົ້າ ແລະ ຜະລິດຕະພັນຖ່ານ ສົ່ງອອກ ຂອງໂຮງງານຜະລິດຖ່ານ ໃນຂອບເຂດທົ່ວປະເທດ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ທີ່ຕັ້ງຢູ່ໃນແຂວງ ຂອງຕົນ;

2. ຄົ້ນຄວ້າອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານຜະລິດຖ່ານ ຂະໜາດ ກາງ, ນ້ອຍ ແລະ ການສ້າງຕັ້ງ ແລະ ດຳເນີນກິດຈະການເຕົາເຜົາຖ່ານດຳແບບຊົ່ວຄາວ ໂດຍການເຫັນດີ ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ;

3. ຄົ້ນຄວ້າອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງເຕົາເຜົາຖ່ານຂາວ ປະເພດ ໃຫຍ່, ກາງ ແລະ ນ້ອຍ ໂດຍການເຫັນດີ ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ;

4. ພິຈາລະນາ ຮັບຮອງແຜນການນຳເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອບກໍ່ສ້າງໂຮງງານ ທີ່ນຳເຂົ້າມາໃຊ້ໃນໂຮງງານຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ທັນສະໄໝ ແລະ ຖືກຕ້ອງຕາມເປົ້າໝາຍຂອງການດຳເນີນກິດຈະການ ໂດຍສອດຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ໂຮງງານຂະໜາດ ກາງ, ນ້ອຍ ແລະ ເຕົາເຜົາຖ່ານຂາວ ປະເພດໃຫຍ່, ກາງ ແລະ ນ້ອຍ;

5. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດຖ່ານ ຂະໜາດ ກາງ, ນ້ອຍ ແລະ ເຕົາເຜົາຖ່ານຂາວ ປະເພດ ໃຫຍ່, ກາງ, ນ້ອຍ ແລະ ດຳເນີນກິດຈະການເຕົາເຜົາຖ່ານດຳ ແບບຊົ່ວຄາວ;

6. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ໂຮງງານ ຢູ່ໃນແຂວງ ຂອງຕົນ;

7. ຢັ້ງຢືນແຜນການເຄື່ອນໄຫວ ປະຈຳງວດ ແລະ ປະຈຳປີ ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ຕາມການແບ່ງຂັ້ນຄຸ້ມຄອງ;

8. ຕິດຕາມ ກວດກາ ໄມ້ສິ້ນເຊົ້າ ແລະ ຜະລິດຕະພັນຖ່ານ ສົ່ງອອກ ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ທີ່ຕັ້ງຢູ່ໃນແຂວງ ຂອງຕົນ;

9. ສະຫຼຸບລາຍງານຂໍ້ມູນ ແລະ ສະພາບການເຄື່ອນໄຫວຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໃຫ້ກົມປ່າໄມ້ ປະຈຳງວດ ແລະ ປະຈຳປີ;

10. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ຜູ້ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ທີ່ຕັ້ງຢູ່ໃນເມືອງຂອງຕົນ;

2. ຄຸ້ມຄອງວັດຖຸດິບ ເຂົ້າໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ທີ່ຕັ້ງຢູ່ໃນເມືອງ ຂອງຕົນ;

3. ຕິດຕາມກວດກາໄມ້ສິ້ນເຊົ້າ ແລະ ຜະລິດຕະພັນຖ່ານ ສົ່ງອອກ ຂອງໂຮງງານ ທີ່ຕັ້ງຢູ່ໃນເມືອງຂອງຕົນ;

4. ສະຫຼຸບລາຍງານຂໍ້ມູນ ແລະ ສະພາບການເຄື່ອນໄຫວຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຂອງຕົນ ປະຈຳງວດ ແລະ ປະຈຳປີ;

5. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 63 ການກວດກາ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ**

ການກວດກາໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ແມ່ນ ການກວດກາ ການດຳເນີນກິດຈະການ, ສະພາບເຕັກນິກຂອງອາຄານໂຮງງານ, ເຄື່ອງຈັກໂຮງງານຜະລິດຖ່ານ, ເຕົາເຜົາຖ່ານ, ຂະບວນການຜະລິດ, ຄວາມປອດໄພ, ການນຳໃຊ້ແຮງງານ, ຜະລິດຕະພັນ, ລະບົບກຳຈັດສິ່ງເສດເຫຼືອ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງ ການປະຕິບັດສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການ.

**ມາດຕາ 64 ຮູບການກວດກາໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ**

ການກວດກາໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ມີ ສາມ ຮູບການ ດັ່ງນີ້:

**1. ການກວດກາຕາມລະບົບປົກກະຕິ**

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ຕາມແຜນການ, ຂັ້ນຕອນ ແລະ ມີກຳນົດໄລຍະເວລາທີ່ແນ່ນອນ ຊຶ່ງປະກອບດ້ວຍ ການກວດກາກ່ອນການສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ, ການດຳເນີນກິດຈະການ, ການຕໍ່ອາຍຸ, ການຂະຫຍາຍ ແລະ ການສິ້ນສຸດກິດຈະການ.

ການກວດກາປົກກະຕິ ຕ້ອງສ້າງແຜນລົງກວດກາ ໂດຍກຳນົດວັນ, ເວລາຢ່າງຈະແຈ້ງ ແລະ ຕ້ອງໄດ້ປະຕິບັດເປັນປະຈຳຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ. ກ່ອນລົງກວດກາຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການຊາບກ່ອນລ່ວງໜ້າຢ່າງໜ້ອຍ ສາມ ວັນ ກ່ອນມື້ລົງກວດກາ ພ້ອມທັງເຮັດບົດບັນທຶກການກວດກາ.

**2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ**

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາຕາມແຜນ ຫຼື ນອກແຜນ, ກ່ອນລົງກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ທີ່ຈະລົງກວດກາຮັບຊາບ ກ່ອນລ່ວງໜ້າ ຢ່າງໜ້ອຍ ຫ້າ ວັນ.

ການກວດການອກແຜນ ແມ່ນການກວດກາ ໃນກໍລະນີ ທີ່ເຫັນວ່າ ມີຄວາມຈຳເປັນ ຫຼື ຕາມຄຳສັ່ງ ທີ່ຕ້ອງໄດ້ລົງກວດກາ ເຊັ່ນ ການສ້າງຕັ້ງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ, ການຂະຫຍາຍ ຫຼື ການເຄື່ອນໄຫວກິດຈະການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

**3. ການກວດກາແບບກະທັນຫັນ**

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າ ມີຄວາມຈຳເປັນ ແລະ ຮີບດ່ວນ ເປັນຕົ້ນ ມີຄຳສັ່ງຊີ້ນຳຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ສົງໄສວ່າ ອາດກໍ່ໃຫ້ເກີດບັນຫາທີ່ເປັນຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ, ການເຄື່ອນໄຫວຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ບໍ່ຖືກຕ້ອງຕາມເປົ້າໝາຍຂອງການອະນຸຍາດ, ເຄື່ອນໄຫວຜິດຕໍ່ ກົດໝາຍ, ລະບຽບການ, ເກີດອຸບປະຕິເຫດແຮງງານ, ເກີດອັກຄີໄພ ມີຜົນເສຍຫາຍຮ້າຍແຮງ ຕໍ່ຊີວິດ ແລະ ຊັບສິນ.

ການກວດກາແບບກະທັນຫັນ ແມ່ນລົງກວດກາ ໄດ້ທຸກເວລາ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຊາບ ພ້ອມທັງເຮັດບົດບັນທຶກການກວດກາ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 65 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າໃນວຽກງານຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 66 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 67 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີໄດ້ຮັບຜົນດີ.

**ມາດຕາ 68 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 19 ພະຈິກ 2024 ເປັນຕົ້ນໄປ.

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ

ຮງຖ/ຕຖ.1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.............................

ເມືອງ.............................

ໂຮງງານ/ເຕົາ...............................

ໂທລະສັບ............................

## ແຜນການຜະລິດປີ..................................................

ເລກທີ............./..........

ຫົວໜ່ວຍ:...............................ກີບ/$

| ລ/ດ | ລາຍການ ການຜະລິດ | ເລກ ລະຫັດ | ຫົວໜ່ວຍ | ແຜນການປີ | | | ແຜນການປະຈຳງວດ | | | | | | | | ສຳເລັດ ຮູບ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | ລາຄາ | ຈຳນວນ | ມູນຄ່າ | ງວດ 1 | | ງວດ 2 | | ງວດ 3 | | ງວດ 4 | | | |
| | | | | | | | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | | |
| 1 | 2 | 3 | 4 | 5 | 6 | 7=5x6 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 |
| | | | | | | | | | | | | | | | | |
| | | | | | | | | | | | | | | | | |
| | | | | | | | | | | | | | | | | |
| | | | | | | | | | | | | | | | | |
| | | | | | | | | | | | | | | | | |

...................,ວັນທີ.................

ຜູ້ອຳນວຍການຜະລິດ/ໂຮງງານ

...................,ວັນທີ................

ຜູ້ສ້າງແຜນ

ຮຽຖ/ຕຖ.2

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..............................
ເມືອງ..............................
ໂຮງງານ..............................
ໂທລະສັບ............................

**ແຜນການຈຳໜ່າຍປີ...........................................**

ເລກທີ.............../...........
ຫົວໜ່ວຍ:..................ກີບ/$

| ລ/ດ | ລາຍການ ການຜະລິດ | ເລກ ລະຫັດ | ຫົວ ໜ່ວຍ | ແຜນການປີ | | | ແຜນການປະຈຳງວດ | | | | | | | | ເຖິງສຳ ເລັດຮູບ | ສຳເລັດ ຮູບ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | ລາຄາ | ຈຳ ນວນ | ມູນຄ່າ | ງວດ 1 | | ງວດ 2 | | ງວດ 3 | | ງວດ 4 | | | | |
| | | | | | | | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | | | |
| 1 | 2 | 3 | 4 | 5 | 6 | 7=5x6 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 |
| | | | | | | | | | | | | | | | | | |
| | | | | | | | | | | | | | | | | | |
| | | | | | | | | | | | | | | | | | |

**..................,ວັນທີ.................**
**ຜູ້ອຳນວຍການພະລິດ/ໂຮງງານ**

**..................,ວັນທີ................**
**ຜູ້ສ້າງແຜນ**

ຣງຖ/ຕຖ.3

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.............................

ເມືອງ.............................

ໂຮງ.............................

ໂທລະສັບ.............................

**ແຜນການຄວາມຕ້ອງການປີ.................**

ເລກທີ............./............

( ວັດຖຸດິບ, ອຸປະກອນ, ອາໄຫລ່, ເຄື່ອງຈັກ ແລະ ອື່ນໆ )

ຫົວໜ່ວຍ:...................ກີບ/$

| ລ/ດ | ລາຍການຄວາມຕ້ອງການ | ຫົວໜ່ວຍ | ແຜນການປີ | | ແຜນການປະຈຳງວດ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | | | ຈຳນວນ | ມູນຄ່າ | ງວດ 1 | | ງວດ 2 | | ງວດ 3 | | ງວດ 4 | | |
| | | | | | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | |
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 |
| I | ວັດຖຸດິບ: | | | | | | | | | | | | |
| 1 | | | | | | | | | | | | | |
| 1 | | | | | | | | | | | | | |
| II | ວັດຖຸສຳຮອງ: | | | | | | | | | | | | |
| 2 | | | | | | | | | | | | | |
| 2 | | | | | | | | | | | | | |
| III | ອຸປະກອນເຄື່ອງຈັກ: | | | | | | | | | | | | |
| 3 | | | | | | | | | | | | | |
| IV | ອື່ນໆ: | | | | | | | | | | | | |
| 4 | | | | | | | | | | | | | |
| | ລວມ | | | | | | | | | | | | |

....................,ວັນທີ.................

**ຜູ້ອຳນວຍການພະລິດ/ໂຮງງານ**

....................,ວັນທີ.................

**ຜູ້ສ້າງແຜນ**

ຣງຖ/ຕຖ.4

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ...........................
ເມືອງ..........................
ໂຮງງານ........................
ໂທລະສັບ......................

## ການຄິດໄລ່ລາຄາສຳເລັດຮູບ ຕໍ່ໜຶ່ງຫົວໜ່ວຍຜະລິດຕະພັນ

| ລ/ດ | ເນື້ອໃນ | ມູນຄ່າຜະລິດຕະພັນ | ໝາຍເຫດ |
|---|---|---|---|
| 1 | ລວມຕົ້ນທຶນການຜະລິດ | | |
| 2 | ວັດຖຸດິບຕົ້ນຕໍ | | |
| 3 | ວັດຖຸດິບສຳຮອງ | | |
| 4 | ດອກເບ້ຍທະນາຄານ | | |
| 5 | ຫລຸ້ຍຫ້ຽນເຄື່ອງຈັກພາຫານະ | | |
| 6 | ແຮງງານເງິນເດືອນ | | |
| 7 | ນ້ຳມັນເຊື້ອໄຟ | | |
| 8 | ໄຟຟ້າ | | |
| 9 | ນ້ຳປະປາ | | |
| 10 | ຄ່າສ້ອມແປງ | | |
| 11 | ຄຸ້ມຄອງບໍລິຫານ | | |
| 12 | ຄ່າໃຊ້ຈ່າຍອື່ນໆ | | |
| 13 | ຄ່າປະກັນໄພ | | |
| 14 | ຄ່າໂທລະສັບ | | |
| 15 | ຄ່າບໍລິການທາງນອກ(out sourcing) | | |
| II | ລາຄາຂາຍຍ່ອຍໂຮງງານ | | |
| 1 | ອາກອນທຸລະກິດ | | |
| 2 | ກຳໄລລວມ | | |
| | ............................. | | |
| 3 | ............................. | | |
| 4 | ລາຄາຂາຍຍົກໂຮງງານ | | |
| III | ............................... | | |

ຜະລິດຕະພັນ.......................(ຫົວໜ່ວຍ:............................ກີບ/ໂຄລາ)

**ວັນທີ.................** **ວັນທີ...............**

**ຫົວໜ້າອຳນວຍການບໍລິສັດ/ໂຮງງານ** **ຜູ້ຄິດໄລ່**

ຣງຖ/ຕຖ.5

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.........
ເມືອງ.........
...........
ໂທລະສັບ...........

**ການຄິດໄລ່ລາຄາສຳເລັດຮູບ ຕໍ່ໜຶ່ງຫົວໜ່ວຍຜະລິດຕະພັນ**

**ຊື່ຜະລິດຕະພັນ.......................................** **(ຫົວໜ່ວຍ:.....................ກິບ/ໂດລາ)**

| ລ/ດ | ເນື້ອໃນ | ມູນຄ່າຜະລິດຕະພັນ | ໝາຍເຫດ |
|---|---|---|---|
| I | **ລວມຕົ້ນທຶນການຜະລິດ** | | |
| 1 | ວັດຖຸດິບຕົ້ນຕໍ | | |
| 2 | ວັດຖຸດິບສຳຮອງ | | |
| 3 | ດອກເບ້ຍທະນາຄານ | | |
| 4 | ຫລຸ້ຍຫ້ຽນເຄື່ອງຈັກພາຫານະ | | |
| 5 | ແຮງງານເງິນເດືອນ | | |
| 6 | ຄ່ານ້ຳມັນເຊື້ອໄຟ | | |
| 7 | ຄ່າໄຟຟ້າ | | |
| 8 | ຄ່ານ້ຳປະປາ | | |
| 9 | ຄ່າສ້ອມແປງ | | |
| 11 | ຄຸ້ມຄອງບໍລິຫານ | | |
| 12 | ຄ່າໃຊ້ຈ່າຍອື່ນໆ | | |
| 13 | ຄ່າປະກັນໄພ | | |
| 14 | ຄ່າໂທລະສັບ | | |
| 15 | ຄ່າບໍລິການທາງນອກ(out sourcing) | | |
| II | **ລາຄາຂາຍຍ່ອຍໂຮງງານ** | | |
| 1 | ອາກອນທຸລະກິດ | | |
| 2 | ກຳໄລລວມ | | |
| | ............................. | | |
| 3 | **ລາຄາຂາຍຍົກໂຮງງານ** | | |
| III | ............................... | | |

**ວັນທີ.................**
**ຜູ້ອານວຍການບໍລິສັດ/ໂຮງງານ**

**ວັນທີ...............**
**ຜູ້ຄິດໄລ່**

ຮຽຖ/ຕຖ.6

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.....................

ເມືອງ......................

ໂຮງງານ..................

ໂທລະສັບ................

**ສະຫຼຸບການນຳເຂົ້າວັດຖຸດິບ, ອາໄຫຼ່, ອຸປະກອນ, ຊິ້ນສ່ວນ, ເຄື່ອງຈັກ ແລະ ການຈຳໜ່າຍ ຜະລິດຕະພັນ**

**ປະຈຳງວດ.........ປີ 20..........ປະຕິບັດໄດ້.................%** **(ຫົວໜ່ວຍ..............................ກີບ/$)**

| ລ/ດ | ລາຍການ | ຫົວໜ່ວຍ | ແຜນການປີ.......... | | ປະຕິບັດປີ.......... | | ປະຕິບັດປະຈຳງວດ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | ງວດ 1 | | ງວດ 2 | | ງວດ 3 | | ງວດ 4 | | |
| | | | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | ຈຳນວນ | ມູນຄ່າ | |
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 |
| I | ການນຳເຂົ້າ | | | | | | | | | | | | | | |
| 1 | | | | | | | | | | | | | | | |
| 2 | | | | | | | | | | | | | | | |
| II | ການນຳຜ່ານ | | | | | | | | | | | | | | |
| ກ | ຂາຍພາຍໃນປະເທດ | | | | | | | | | | | | | | |
| 1 | | | | | | | | | | | | | | | |
| 2 | | | | | | | | | | | | | | | |
| ກ | ຂາຍອອກຕ່າງປະເທດ | | | | | | | | | | | | | | |
| 1 | | | | | | | | | | | | | | | |
| 2 | | | | | | | | | | | | | | | |
| III | ລາຍການຄ້າງສາງ(ຜິດດ່ຽງ) | | | | | | | | | | | | | | |

....................., ວັນທີ ...................

**ຜູ້ອຳນວຍການບໍລິສັດ/ໂຮງງານ**

....................., ວັນທີ ...................

**ຜູ້ສະຫຼຸບ**

ຣງຖ/ຕຖ.7

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ..............................

ເມືອງ..............................

ໂຮງງານ............................

ໂທລະສັບ............................

## ກຳນົດໝາຍ ເສດຖະກິດ ເຕັກນິກ ການສິ້ນເປືອງ

### ວັດຖຸດິບ, ອຸປະກອນ,ອາໄຫລ່, ເຄື່ອງຈັກ ແລະ ອື່ນໆ

| ລ/ດ | ລາຍການວັດຖຸດິບ,ອຸປະກອນ,ອາໄຫລ ແລະ ສິ້ນສ່ວນ | ຫົວໜ່ວຍ | ຈຳນວນ | ບ່ອນຕິດເຄື່ອງໝາຍ ຜະລິດຕະພັນ | ໝາຍເຫດ |
|---|---|---|---|---|---|
| | | | | | |

....................,ວັນທີ..................

ຜູ້ອຳນວຍການບໍລິສັດ/ໂຮງງານ

....................,ວັນທີ..................

ຜູ້ຄິດໄລ່

ຄຍຖ 01

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.............................
ເມືອງ.............................
ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

ເລກທີ: .........../ຫກ.ປມ
ທີ່...................ລົງວັນທີ:........................

# ໃບອະນຸຍາດ
# ເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ (ພາຍໃນ ແຂວງ)

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ການສະເໜີ ຂອງໂຮງງານ, ເຕົາເຜົາຖ່ານ.............ເລກທີ.........., ລົງວັນທີ ......................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ:..........................ອອກໃບອະນຸຍາດ ເຄື່ອນຍ້າຍ**ຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ** ທີ່ເຄື່ອນຍ້າຍຈາກ ບ້ານ:......................ເມືອງ..........................ແຂວງ:..................
ເຖິງບ້ານ:.............................ເມືອງ:..............................ແຂວງ:.............................................
ຈຳນວນທັງໝົດ:................................ ດັ່ງລາຍລະອຽດ ລຸ່ມນີ້:

1. **ຂໍ້ມູນຂອງໂຮງງານ, ເຕົາເຜົາຖ່ານ**

1 ໃບທະບຽນວິສາຫະກິດ ເລກທີ ............................................................, ລົງວັນທີ ........................;

2 ໃບຢັ້ງຢືນ ດຳເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ເລກທີ ........, ລົງວັນທີ.........................;

3 ໃບຢັ້ງຢືນການຊຳລະອາກອນປີຜ່ານມາ ເລກທີ .............................................., ລົງວັນທີ.........................;

4 ສັນຍາຊື້-ຂາຍ ຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ເລກທີ ........................, ລົງວັນທີ ..................

5 ແຈ້ງການແຜນການຂຸດຄົ້ນ ເລກທີ..........................................................,ລົງວັນທີ...............

6 ໃບອະນຸຍາດຂຸດຄົ້ນໄມ້ ເລກທີ...............................................................,ລົງວັນທີ................

7 ໃບຢັ້ງຢືນການຈ່າຍ ຄ່າຊົດເຊີຍທຳມະຊາດ ແລະ ອາກອນຕ່າງໆ..................

2. **ຖ່ານ ທີ່ໄດ້ລະບຸໄວ້ໃນຕາຕະລາງ**

| ລ/ດ | ຍີ່ຫໍ້ລົດ | ທະບຽນລົດຂົນສົ່ງ | ຈຳນວນ | ນ້ຳໜັກ (ໂຕນ) |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |

| | | | | |
|---|---|---|---|---|
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |
| 14 | | | | |
| | ລວມ: | | | |

1. ໃບເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ.......ເດືອນ..............ປີ.......... ເຖິງວັນທີ.........ເດືອນ........... ປີ..................;
2. ເວລາເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ຕ້ອງເອົາເອກະສານເຄື່ອນຍ້າຍ ສະບັບນີ້ ໄປພ້ອມທຸກຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ;
3. ໃນກໍລະນີກວດພົບເຫັນວ່າ ມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງ ຕາມໃບອະນຸຍາດສະບັບນີ້, ເຈົ້າຂອງໂຮງງານ ແລະ ເຈົ້າຂອງລົດ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ກົດໝາຍ;
4. ຫ້າມປອມແປງ ແລະ ຊື້-ຂາຍ ໃບເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ສະບັບນີ້ຢ່າງເດັດຂາດ, ຖ້າຜູ້ໃດລະເມີດຈະໄດ້ຮັບໂທດຕາມກົດໝາຍ.

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດເຄື່ອນຍ້າຍສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ.

**ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ຄຍຖ 02

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**Lao People's Democratic Republic**
**Peace Independence Democracy Unity Prosperity**

ແຂວງ/Province................................
ພະແນກກະສິກຳ ແລະ ປ່າໄມ້ແຂວງ
Provincial Agriculture and Forestry Office

ເລກທີ/No: ............/............ພກປ/PAFO
ທີ່/At................ລົງວັນທີ/date:..................

# ໃບອະນຸຍາດ
# ເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ອອກຕ່າງປະເທດ
# Permit for transportation of Briquette charcoal, Pellets charcoal and White charcoal products for export

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019; Reference to the Law on Forestry (Revised) No. 64/NA, date 13 June 2019;
- ອີງຕາມ ການສະເໜີ ຂອງໂຮງງານ, ເຕົາເຜົາຖ່ານ/ບໍລິສັດ /Reference to the Factory/Company request.......................... ເລກທີ No:......................., ລົງວັນທີ/date:.............................;
- ອີງຕາມ ໜັງສືສະເໜີ ຂອງຂະແໜງປ່າໄມ້ແຂວງ Reference to the Provincial Forestry Sector request.......................................ເລກທີ No:..............., ລົງວັນທີ date:........................

ພະແນກກະສິກຳ ແລະ ປ່າໄມ້ແຂວງ/ Provincial Agriculture and Forestry Office PAFO of ..........................................ອອກໃບອະນຸຍາດ ເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ອອກໄປຕ່າງປະເທດ ໃຫ້ແກ່/ issue this transport permit of Briquette charcoal, Pellets charcoal and White charcoal products to.................................................
ເພື່ອເຄື່ອນຍ້າຍອອກໄປປະເທດ/For export to..............................................ໂດຍຜ່ານດ່ານສາກົນ/Transit via.........................ແຂວງ/Province.............................ຈຳນວນ/Quantity.......................................

| ລຳດັບ/ Item | ລາຍການ/Description | ຈຳນວນ/Qty | ຫົວໜ່ວຍ/ Unit | ທະບຽນພາຫະນະ ນຳເບີ | ໝາຍເຫດ/ Remarks |
|---|---|---|---|---|---|
| | | | | | |

| | | | | | |
|---|---|---|---|---|---|
| | | | | | |
| | **ລວມ/Total** | | | | |

1 ໃບເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ສະບັບນີ້ ນຳໃຊ້ໄດ້ ແຕ່ວັນທີ/This transport permit of Briquette charcoal, Pellets charcoal and White charcoal products is valid from .................ເຖິງ ວັນທີ/ to .....................

2 ເວລາເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ຕ້ອງໄດ້ເອົາເອກະສານເຄື່ອນຍ້າຍ ສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ໃນເວລາກວດກາ/The transport permit is issued for each load of Briquette charcoal, Pellets charcoal and White charcoal products being transported and upon technical inspection by government;

3 ໃນກໍລະນີກວດພົບເຫັນວ່າມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງ ຕາມໃບອະນຸຍາດສະບັບນີ້, ເຈົ້າຂອງໂຮງງານ, ເຕົາເຜົາຖ່ານ/ບໍລິສັດ ແລະ ເຈົ້າຂອງລົດ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ກົດໝາຍ/ In the event that other products are found to be combined or inconsistent with this license, the, factory/company owners, and vehicle owners must be directly responsible for the law;

4 ຫ້າມປອມແປງ ແລະ ຊື້-ຂາຍ ໃບເຄື່ອນຍ້າຍຖ່ານ ອັດແທ່ງ, ອັດເມັດ ແລະ ຖ່ານຂາວ ສະບັບນີ້ຢ່າງເດັດຂາດ, ຖ້າຜູ້ໃດລະເມີດຈະໄດ້ຮັບໂທດຕາມກົດໝາຍ/ strictly forbidden to falsify, hand over, buy or sell this transport permit of Briquette charcoal, Pellets charcoal and White charcoal products for export, if anyone violates it, he will be punished according to the law.

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດສົ່ງອອກ ສະບັບນີ້ ເພື່ອເປັນບ່ອນອີງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງTherefore, this transport permit is issued as a reference for the relevant parties.

**ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ**
**Approved by Head of PAFO**

ຮຽຖ/ຕຖ 03

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ...............

ພະແນກກະສິກຳ ແລະ ປ່າໄມ້ແຂວງ....... ເລກທີ /ພກປ

ທີ່ ......................, ວັນທີ.....................

# ຂໍ້ຕົກລົງ
## ວ່າດ້ວຍການອະນຸມັດ ສ້າງຕັ້ງໂຮງງານ/ເຕົາເຜົາຖ່ານຂາວ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ ສະບັບເລກທີ 1591/ກປ, ລົງວັນທີ 27 ທັນວາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ສະບັບເລກທີ...../ກປ, ລົງວັນທີ....;
- ອີງຕາມ ທິດຊີ້ນຳ ຂອງທ່ານເຈົ້າແຂວງ..............................ລົງວັນທີ.....................................;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຂະແໜງການປ່າໄມ້ ສະບັບເລກທີ............/ຂປມ, ລົງວັນທີ.............. .

### ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 01** ເຫັນດີ ອະນຸມັດ ສ້າງຕັ້ງໂຮງງານ/ເຕົາເຜົາຖ່ານ..................................................... ດັ່ງນີ້:

- ອອກອະນຸຍາດສ້າງຕັ້ງໂຮງງານ/ເຕົາເຜົາຖ່ານ............................ໃຫ້ແກ່:ທ່ານ............................. ຜູ້ອຳນວຍການ............., ບ້ານຢູ່ປະຈຸບັນ: ບ້ານ..........., ເມືອງ................ແຂວງ.....................
- ຖືໃບທະບຽນວິສາຫະກິດ ເລກທີ...................ລົງວັນທີ...................ທຶນຈົດທະບຽນ.................
- ສະຖານທີ່ສ້າງຕັ້ງໂຮງງານ/ເຕົາເຜົາຖ່ານ......................:ບ້ານ....................., ເມືອງ..................... ແຂວງ............................., ເນື້ອທີ່..........................................
- ຕິດຕັ້ງເຄື່ອງຈັກທັງໝົດ:.......................ເຄື່ອງ, ກຳລັງແຮງຂອງເຄື່ອງຈັກທັງໝົດ:...............ແຮງມ້າ ແລະ ມູນຄ່າການລົງທຶນທັງໝົດ.........................., ຕິດຕັ້ງເຕົາເຜົາຖ່ານທັງໝົດ:.....................ເຕົາ.

**ມາດຕາ 02** ມອບໃຫ້ ຂະແໜງປ່າໄມ້ແຂວງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ການກໍ່ສ້າງໂຮງງານ/ເຕົາເຜົາຖ່ານຂາວ ໃຫ້ສອດຄ່ອງຕາມຂະໜາດ, ມາດຖານ, ບົດວິພາກເສດຖະກິດ-ເຕັກນິກ ຂອງໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ. ໃນກໍລະນີ ບໍ່ມີການດຳເນີນການກໍ່ສ້າງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ພາຍໃນ 12 ເດືອນ ຂໍ້ຕົກລົງ ສະບັບນີ້ ຈະຖືກລົບລ້າງ.

**ມາດຕາ 03** ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຫົວໜ້າພະແນກ**

**<u>ບ່ອນນຳສົ່ງ:</u>**
- ທ່ານ ຫົວໜ້າຫຼື ຮອງພະແນກ ທ່ານລະ01 ສະບັບ;
- ກົມປ່າໄມ້ 01 ສະບັບ;
- ຂະແໜງປ່າໄມ້ແຂວງ 01 ສະບັບ;
- ເກັບມ້ຽນໄວ້ 01 ສະບັບ.

ຮຽຖ/ຕຖ 04

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄໍາຮ້ອງ

## ຂໍອະນຸຍາດ ດໍາເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານຂາວ

☐ ຂໍດໍາເນີນກິດຈະການໂຮງງານ/ເຕົາເຜົາຖ່ານ, ☐ ຂໍຕໍ່ອາຍຸດໍາເນີນກິດຈະການໂຮງງານ/ເຕົາເຜົາຖ່ານຂາວ ຄັ້ງທີ........................ ☐ ຂໍດໍາເນີນກິດຈະການໂຮງງານທີ່ຂະຫຍາຍ ຄັ້ງທີ..........................

**ຮຽນ:** .......................................................................................................
**ເລື່ອງ:**.......................................................................................................

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍຄຸ້ມຄອງ, ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ.

ຂ້າພະເຈົ້າ:.........................................., ອາຍຸ:............. ປີ:........................ ປັດຈຸບັນຢູ່ເຮືອນ ເລກທີ:......................, ບ້ານ:......................, ເມືອງ:........................ ແຂວງ: .........................., ໂທລະສັບ:...............................Email:......................................

ໃນນາມ: ☐ ເຈົ້າຂອງກິດຈະການ, ☐ ຜູ້ອໍານວຍການບໍລິສັດ ໂຮງງານ/ເຕົາເຜົາຖ່ານ.

ໄດ້ຮັບໃບຢັ້ງຢືນດໍາເນີນກິດຈະການໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ, ສະບັບເລກທີ.........., ລົງວັນທີ...........

### 1. ສະພາບລວມຂອງໂຮງງານ

- ຊື່ວິສາຫະກິດ:.......................................................................................................
- ຊື່ໂຮງງານ/ເຕົາ: .......................................................................................................
- ທີ່ຕັ້ງໂຮງງານ/ເຕົາ:.........................., ເມືອງ:..........................., ແຂວງ..............................

  ໂທລະສັບ:....................................................., Email................
- ຂະຫຍາຍໂຮງງານ/ເຕົາດ້ວຍການເພີ່ມ: ☐ ເຄື່ອງຈັກ, ເຕົາ ☐ ເນື້ອທີ່ອາຄານໂຮງງານ

1) ບໍລິເວນໂຮງງານ/ເຕົາມີເນື້ອທີ່ທັງໝົດ:..........................; ເນື້ອທີ່ອາຄານໂຮງງານ/ເຕົາ:.................., ເພີ່ມຂຶ້ນໃໝ່..................................

2) ອາຄານໂຮງງານ/ເຕົາ: ມີຢູ່ເດີມ........... ຫຼັງ, ☐ ກໍ່ສ້າງຂຶ້ນໃໝ່ ....... ຫຼັງ, ລວມຈໍານວນ ...... ຫຼັງ ຄື:

| ອາຄານ ໂຮງງານ/ ເຕົາ | ຈໍານວນ (ຊັ້ນ) | ຂະໜາດ (ແມັດ) | ເນື້ອທີ່ (ແມັດ²) | ໂຄງສ້າງ ເຮັດດ້ວຍ | ພື້ນ ເຮັດດ້ວຍ | ຝາເຮັດ ດ້ວຍ | ເພດານ ເຮັດດ້ວຍ | ຫຼັງຄາ ເຮັດດ້ວຍ | ໝາຍ ເຫດ |
|---|---|---|---|---|---|---|---|---|---|
| | | | | | | | | | |
| | | | | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| | | | | | | | | | |
| | | | | | | | | | |

3) ຂອບເຂດທີ່ດິນຂອງໂຮງງານ

- ທິດເໜືອ ຕິດກັບ.......................................................................................
- ທິດໃຕ້ ຕິດກັບ.........................................................................................
- ທິດຕາເວັນອອກ ຕິດກັບ...............................................................................
- ທິດຕາເວັນຕົກ ຕິດກັບ.................................................................................

2. **ມູນຄ່າການລົງທຶນ**

1) ທຶນຈົດທະບຽນ : ......................................................................................

2) ທຶນທັງໝົດ:...............................................................................................

3. **ຄາດຄະເນເຄື່ອນໄຫວການຜະລິດ**

..............................................................................................................

..............................................................................................................

..............................................................................................................

4. **ພະນັກງານ ແລະ ກຳມະກອນ ໃນໂຮງງານ**

- ພະນັກງານຄະນະບໍລິຫານງານ ແລະ ວິຊາການ ຈຳນວນ..... ຄົນ,ຍິງ..... ຄົນ, ຕ່າງປະເທດ..... ຄົນ, ຍິງ..... ຄົນ;
- ກຳມະກອນ ຈຳນວນ..........ຄົນ, ຍິງ..........ຄົນ, ຕ່າງປະເທດ...............ຄົນ, ຍິງ...............ຄົນ.

5. **ເຄື່ອງຈັກ**

- ເຄື່ອງຈັກທັງໝົດທີ່ມີແລ້ວ.............................ເຄື່ອງ, ກຳລັງແຮງມ້າລວມ.......................ແຮງມ້າ;
- ເຄື່ອງຈັກເພີ່ມໃໝ່.......................................ເຄື່ອງ, ກຳລັງແຮງມ້າລວມ.......................ແຮງມ້າ.
- ເຕົາທັງໝົດທີ່ມີແລ້ວ...................................ເຕົາ, ເພີ່ມໃໝ່....................................ເຕົາ.

6. **ວັດຖຸດິບຕົ້ນຕໍເຂົ້າໂຮງງານ/ເຕົາ**

| ລ/ດ | ຊື່ວັດຖຸດິບ | ຄາດຄະເນການນຳໃຊ້ວັດຖຸດິບຕໍ່ປີ | ແຫຼ່ງທີ່ມາວັດຖຸດິບ | | |
|---|---|---|---|---|---|
| | | | ພາຍໃນ | ຕ່າງປະເທດ | ແຫຼ່ງຂຸດຄົ້ນ |
| | | | | | |
| | | | | | |

7. **ຜະລິດຕະພັນຕົ້ນຕໍ, ສຳຮອງ ຫຼື ຜະລິດຕະພັນໃໝ່**

| ລ/ດ | ຊື່ຜະລິດຕະພັນ | ຄາດຄະເນຜະລິດຕະພັນຕໍ່ປີ | ເປົ້າໝາຍຈຳໜ່າຍ | |
|---|---|---|---|---|
| | | | ພາຍໃນ | ຕ່າງປະເທດ |
| | | | | |
| | | | | |

ຂ້າພະເຈົ້າຂໍຢັ້ງຢືນວ່າ ຂໍ້ມູນຂ້າງເທິງນີ້ເປັນຄວາມຈິງ ແລະ ຖືກຕ້ອງ. ສະນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມກົດໝາຍ ແລະ ລະບຽບການດ້ວຍ.

ດ້ວຍຄວາມນັບຖື.

ທີ່.........................ວັນທີ.....................

ຜູ້ຮ້ອງຂໍ

ຮຽຖ 05

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ກົມປ່າໄມ້

ເລກທີ: /ກປມ

ນະຄອນຫຼວງວຽງຈັນ, ວັນທີ:

# ໃບຢັ້ງຢືນ

## ດຳເນີນກິດຈະການ ໂຮງງານຜະລິດຖ່ານ

ຮູບ 3x4
ພື້ນຂາວ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ສະບັບເລກທີ........../ ກປ, ລົງວັນທີ.........................;
- ອີງຕາມ ໃບຄຳຮ້ອງຂອງ..........................................., ລົງວັນທີ..........................
- ອີງຕາມ ບົດບັນທຶກ ການລົງກວດກາໂຮງງານ ສະບັບລົງວັນທີ.......................................

## ກົມປ່າໄມ້ ຢັ້ງຢືນ ໃຫ້:

ທ່ານ:............................................................., ອາຍຸ:.............ປີ, ສັນຊາດ:............................. ໃນ
ນາມ:........................................................................................................................ປະຈຸບັນຢູ່
ບ້ານ:................................., ເມືອງ:...................................., ແຂວງ:............................
ໂທລະສັບ.........................................................................................................................
ຊື່ວິສາຫະກິດ:...................................................................................................................
ຊື່ໂຮງງານ:........................................................................................................................
ດຳເນີນກິດຈະການ:.............................................................................................................
ຕິດຕັ້ງເຄື່ອງຈັກທັງໝົດ.............................. ເຄື່ອງ, ກຳລັງແຮງມ້າລວມ...................................... ແຮງມ້າ
ໂຮງງານຂະໜາດ:................................................................................................................
ໂຮງງານຕັ້ງຢູ່ບ້ານ:............................., ເມືອງ:................................., ແຂວງ:..............................
ເນື້ອທີ່ໂຮງງານ:.................................................................................................................

ຜູ້ທີ່ໄດ້ຮັບໃບຢັ້ງຢືນ ສະບັບນີ້ ຕ້ອງດຳເນີນກິດຈະການ ຕາມທີ່ໄດ້ລະບຸໄວ້ຂ້າງເທິງ, ພ້ອມທັງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ໃບຢັ້ງຢືນສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ໄດ້ເຖິງວັນທີ.........................

**ຫົວໜ້າກົມ**

## <u>ເຄື່ອງຈັກ ແລະ ເຄື່ອງມື ອຸປະກອນ ທີ່ໄດ້ນຳໃຊ້ເຂົ້າໃນໂຮງງານ ປະກອບມີ:</u>

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ | ແຮງມ້າຂອງເຄື່ອງຈັກ | | ລວມແຮງມ້າ |
|---|---|---|---|---|---|---|
| | | | | HP | KW | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |

**<u>ໝາຍເຫດ:</u>**

- ບໍລິສັດ/ໂຮງງານ ທີ່ໄດ້ຮັບ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ຕ້ອງມາຕໍ່ໃບຢັ້ງຢືນ (ຊ້າສຸດແມ່ນບໍ່ໃຫ້ກາຍ 01 ເດືອນ) ກ່ອນໃບຢັ້ງຢືນ ດັ່ງກ່າວຈະໝົດອາຍຸການນຳໃຊ້ ແລະ ດຳເນີນຂັ້ນຕອນ ຕາມມາດຕາ 42 ຂອງຂໍ້ຕົກລົງ ສະບັບເລກທີ   /ກປ, ລົງວັນທີ   ຕຸລາ 2024.

- ຖ້າບໍລິສັດ/ໂຮງງານ ໃດຫາກບໍ່ມາຕໍ່ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ຕາມກຳນົດເວລາແລ້ວ, ກົມປ່າໄມ້ ຈະໄດ້ເຮັດໜັງສືແຈ້ງເຕືອນ ແລະ ຖ້າຍັງບໍ່ທັນມາຕໍ່ໃບອະນຸຍາດດັ່ງກ່າວ ແມ່ນຈະຖືກປະຕິບັດວິໄນ ດັ່ງນີ້:
  1. ຖ້າບໍ່ມາຕໍ່ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ພາຍໃນກຳນົດ 01 ປີ ແມ່ນຈະຖືກປັບໃໝໜຶ່ງເທົ່າ ຂອງຄ່າທຳນຽມ ໃນການອອກ ຫຼື ຕໍ່ໃບຢັ້ງຢືນດັ່ງກ່າວ ແລະ ປັບໃໝ ຕາມລະບຽບການ;
  2. ຖ້າບໍ່ມາຕໍ່ ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ພາຍໃນ 02 ປີ ແມ່ນຈະຖືກປັບໃໝສອງເທົ່າ ຂອງຄ່າທຳນຽມ ໃນການອອກ ຫຼື ຕໍ່ໃບຢັ້ງຢືນດັ່ງກ່າວ, ປັບໃໝ ຕາມລະບຽບການ;
  3. ຖ້າບໍ່ມາຕໍ່ໃບຢັ້ງຢືນ ການດຳເນີນກິດຈະການ ໂຮງງານຜະລິດຖ່ານ ພາຍໃນ 03 ປີ ຫຼື ບໍ່ມາຕໍ່ເລີຍຈະຖືກໂຈະ ຫຼື ຍົກເລີກໃບຢັ້ງຢືນ ດັ່ງກ່າວ.

ຮຽຖ/ຕຖ 06

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.................

ພະແນກກະສິກຳ ແລະ ປ່າໄມ້ ແຂວງ...................... ເລກທີ: /ພກປ

......................., ວັນທີ:

# ໃບຢັ້ງຢືນ

## ດຳເນີນກິດຈະການ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ

ຮູບ 3x4
ພື້ນຂາວ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ໂຮງງານຜະລິດຖ່ານ ແລະ ເຕົາເຜົາຖ່ານ ສະບັບເລກທີ........./ ກປ, ລົງວັນທີ.......................;
- ອີງຕາມ ໃບຄຳຮ້ອງຂອງ.........................................., ລົງວັນທີ.........................
- ອີງຕາມ ບົດບັນທຶກ ການລົງກວດກາໂຮງງານ/ເຕົາເຜົາຖ່ານ ສະບັບລົງວັນທີ............................

### ພະແນກກະສິກຳ ແລະ ປ່າໄມ້ ຢັ້ງຢືນ ໃຫ້:

ທ່ານ:........................................................., ອາຍຸ:.............ປີ, ສັນຊາດ:............................ ໃນ

ນາມ:........................................................................................................................ປະຈຸບັນຢູ່

ບ້ານ:................................, ເມືອງ:.................................., ແຂວງ:............................

ໂທລະສັບ.......................................................................................................................

ຊື່ວິສາຫະກິດ:..................................................................................................................

ຊື່ໂຮງງານ/ເຕົາ:......................................................................................................................

ດຳເນີນກິດຈະການ:...........................................................................................................

ຕິດຕັ້ງເຄື່ອງຈັກທັງໝົດ.............................. ເຄື່ອງ, ກຳລັງແຮງມ້າລວມ.................................... ແຮງມ້າ

ຕິດຕັ້ງເຕົາທັງໝົດ.............................. ເຕົາ.

ໂຮງງານຂະໜາດ:..............................................................................................................

